ກະຊວງກະສິກຳ ແລະ ປ່າໄມ້

ສະຖາບັນຄົ້ນຄ້ວາກະສິກຳ ແລະ ປ່າໄມ້

# ບົດລາຍງານຄວາມຄືບໜ້າ ຂອງກິດຈະກຳການຄົ້ນຄ້ວາດ້ານປ່າໄມ້ ໃນສົກປີ 2005 - 2006



ໂຄງການຍ່ອຍຄົ້ນຄ້ວາປ່າໄມ້

ໂຄງການຄົ້ນຄ້ວາກະສິກຳ ແລະ ປ່າໄມ້ ເຂດພູດອຍຮ່ວມມື ລາວ-ຊູແອດ

ທັນວາ, 2006

สาລະບານ

*ເນື້ອໃນ* *ໜ້າ*

ຄຳຂອບໃຈ 2

ຄຳນຳ 3

ບົດສັງລວມຫຍໍ້ 4

ພາກສະເໜີ 5

ພື້ນທີ່ຂອງໂຄງການ 6

ຂໍ້ມູນພື້ນຖານແຜນງານຄົ້ນຄ້ວາ 7

ການປູກຊະນິດພັນຢາງພາລາ (77-4, GT1) ປະສົມພືດກະສິກຳ ( ສາລີ, ເຂົ້າ, ໝາກເດືອຍ, ໝາກງາ, ຖົ່ວເຫຼືອງ)

*ສົມອນ ວົງຄຳຮົ່* 8

ການປູກເສີມກ້ອງປ່າຊົມໃຊ້ບ້ານ ດ້ວຍເບ້ຍໄມ້ 4 ຊະນິດ ( ຢາງບົງ, ແຕ້ຄ່າ, ດູ່, ຂີ້ມຝາດ)

*ໄລຄຳ ສີຫາບາດ*

12

ການປູກໄມ້ເກດສະໜາ ແລະ ເປືອກເມືອກແບບປະສົມປະສານໃນພື້ນທີ່ດິນຄ້ອຍຊັນ

ໃນລະບົບ Agro Forestry ແລະ Farm Forestry

*ວຽງສຸກ ໝື່ນສຸພົມ ແລະ ສົມຈັບ ບັນທະວົງ* 16

ທົດລອງນຳໃຊ້ຮູບແບບການປູກພືດຄົງທີ່ປະສົມປະສານລະຫວ່າງ ໄມ້ສັກ, ປໍສາ ແລະ ພືດອາຍຸສັ້ນຢູ່ດິນຄ້ອຍຊັນ

*ບຸນປະສັກໄຊ ຄຳພູມີ* 21

ການປູກເປືອກເມືອກໃນພື້ນທີ່ປ່າເລົ່າ

*ສຸນີ ພົມດວງສີ* 26

ການປູກໝາກແໜ່ງໃນພື້ນທີ່ປ່າເລົ່າ

*ສຸນີ ພົມດວງສີ* 29

ການວາງແຜນກຸ່ມບັນພັດທະນາລິງເລີກວຽກຈັດສັນປ່າໄມ້ຊຸມຊົນ

ພົມມາ ປະທຸມມະວົງ 32

## ຄຳຂອບໃຈ


ພວກເຮົາຂໍສະແດງຄວາມຂອບໃຈມາຍັງພະນັກງານທັງ ຍິງ ແລະ ຊາຍ ຈາກໂຄງການຍ່ອຍຄົ້ນຄ້ວາປ່າໄມ້ ແລະ ທີມງານທຸກໆ ພາກສ່ວນ ທີ່ໄດ້ເຮັດ ວຽກ ງານຮ່ວມກັນດ້ວຍຄວາມຫ້າວຫັນ ໃນການວາງແຜນການ, ການຈັດຕັ້ງປະຕິບັດ ແລະ ການຕິດຕາມ ກວດກາ ໃນ ຂະບວນ ການທົດລອງຮ່ວມກັນໃນເຂດພື້ນທີ່ການ ຜະລິດຕົວຈິງຮ່ວມກັບຊາວກະສິກອນ ໃນຊ່ວງລະດູການຜະລິດ ສົກປີ 2005 - 2006, ໃນການເຮັດວຽກງານ ການຄົ້ນຄ້ວາຮ່ວມກັບຊາວກະສິກອນ ພວກເຮົາໄດ້ເຮັດ ວຽກເປັນທີມງານເຊິ່ງປະກອບມາຈາກລາຍພາກສ່ວນ ເຊັ່ນ: ຈາກສູນຄົ້ນຄ້ວາປ່າໄມ້, ສູນຄົ້ນຄ້ວາກະສິກຳ ແລະ ປ່າໄມ້ພາກເໜືອ, ຫ້ອງການສົ່ງເສີມກະສິກຳ ແລະ ປ່າໄມ້ ແລະ ຫ້ອງການປະສານງານໂຄງການ ເມືອງໂພນໄຊ ແລະ, ຫ້ອງການສົ່ງເສີມກະສິກຳ ແລະ ປ່າໄມ້ ແລະ ຫ້ອງການປະສານງານໂຄງການ ເມືອງ ນາໝໍ້, ໂດຍການໃຫ້ຂໍ້ຄິດ ແລະ ເປັນທີ່ປຶກສາຈາກຫົວໜ້າ ປະສານງານໂຄງການຄົ້ນຄ້ວາກະສິກຳ ແລະ ປ່າໄມ້ ເຂດພູດອຍຮ່ວມມື ລາວ- ຊູແອດ, ສູນຄົ້ນຄ້ວາປ່າໄມ້ ແລະ ສະຖາບັນຄົ້ນຄ້ວາກະສິກຳ ແລະ ປ່າໄມ້ ໂດຍການສະໜັບສະໜູນຈາກໂຄງການ Sida ທາງດ້ານງົບປະມານ, ພະຫະ ແລະ ສິ່ງອຳນວຍຄວາມສະດວກອື່ນໆ ຈຶ່ງເຮັດໃຫ້ພວກ ເຮົາສາມາດ ປະສົບ ຜົນ ສຳເລັດໄດ້ເປັນຢ່າງດີ.

ພວກເຮົາສາມາດເວົ້າໄດ້ວ່າ ໃນການປະກອບສ່ວນ ຂອງຊາວກະສິກອນໃນເຂດບ້ານເປົ້າຫມາຍ ຂອງ ໂຄງການທັງສອງເມືອງທີ່ໄດ້ກ່າວມາຂ້າງເທິງແມ່ນມີຄວາມກະຕື ລືລົ້ນ ແລະ ມີຄວາມຕັ້ງໜ້າສູງ ຍ້ອນ ແນວນັ້ນ, ພວກເຮົາຈຶ່ງ ຂໍສະແດງຄວາມຂອບໃຈມາຍັງພວກເຂົາເຈົ້າທັງໝົດເລົ່ານັ້ນ ໃນການເສັຍສະລະເວລາ, ແຮງງານ, ພື້ນທີ່ດິນ ແລະ ຄວາມຮູ້ທ້ອງຖິ່ນທີ່ພວກເຂົາໄດ້ທຸ້ມເທໃສ່ໃນການດຳເນີນການຄົ້ນຄ້ວາທົດລອງຮ່ວມກັນກັບໂຄງການພວກເຮົາ.

ພວກເຮົາມີຄວາມເພິ່ງພໍໃຈ ຕໍ່ກັບບັນດາພະນັກງານ ພະແນກ ຄຸ້ມຄອງການຄົ້ນຄ້ວາ ແລະ ຜູ້ປະສານງານ ອາວຸໂສຂອງໂຄງການ ໃນການຊຸກຍູ້ ແລະ ການໃຫ້ຂໍ້ສະເໜີແນະໃນການວາງແຜນການຕ່າງໆ.
ພວກເຮົາຂໍສະແດງຄວາມຂອບໃຈ ມາຍັງຫົວໜ້າ ແລະ ຄະນະສູນຄົ້ນຄ້ວາປ່າໄມ້, ຫົວໜ້າ ປະສານງານໂຄງການຄົ້ນຄ້ວາກະສິກຳ ແລະ ປ່າໄມ້ ເຂດພູດອຍຮ່ວມມື ລາວ-ຊູແອດ, ຫົວໜ້າ ແລະ ຄະນະສະຖາບັນຄົ້ນຄ້ວາກະສິກຳ ແລະ ປ່າໄມ້ທີ່ໃຫ້ທິດຊີ້ນຳຕ່າງໆ

ພ້ອມດຽວກັນນີ້ ພວກເຮົາມີຄວາມຍິນດີໃນການຮັບຟັງ ຄຳຄິດຄຳເຫັນ ແລະ ຂໍ້ແນະນຳ ຈາກບັນດາ ທ່ານ ຕໍ່ກັບບົດລາຍງານສະບັບນີ້ດ້ວຍ.

ໂຄງການຍ່ອຍຄົ້ນຄ້ວາປ່າໄມ້

ທ່ານ ຄຳພອນ ມູນລະໄມ

## ຄຳນຳ

ໂຄງການຍ່ອຍຄົ້ນຄ້ວາປ່າໄມ້ ແມ່ນໜຶ່ງຂອງຫຼາຍຂອງໂຄງການຍ່ອຍທີ່ຂຶ້ນກັບໂຄງການຄົ້ນຄວ້າກະສິກຳ ແລະ ປ່າໄມ້ ຮ່ວມມືລາວ-ຊູແອດ ທີ່ມີເປົ້າໝາຍ ເພື່ອຄົ້ນຄ້ວາຫາຮູບແບບ, ເຕັກໂນໂລຢີທີ່ເໝາະທາງດ້ານປ່າໄມ້ ເພື່ອຈະບັນຈຸເຂົ້າໃນບັນດາແຜນຍຸດທະສາດທີ່ສຳຄັນຂອງລັດຖະບານ ຄື ການຫຼຸດພົ້ນອອກຈາກຄວາມທຸກຍາກ ໃນປີ 2020 ໂດຍແນໃສ່ ການຮັບປະກັນ ທາງດ້ານສະບຽງອາຫານ ແລະ ການເພີ່ມການປົກຫຸ້ມຂອງປ່າໄມ້ ອັນທີ່ໄດ້ມີການນຳໃຊ້ ແລະ ຈັດສັນຢ່າງຍືນຍົງ.

ໂຄງການຍ່ອຍຄົ້ນຄ້ວາປ່າໄມ້ ໄດ້ດຳເນີນການຄົ້ນຄ້ວາເລີ່ມແຕ່ ປີ 2002 ເປັນຕົ້ນມາ ຊຶ່ງໄດ້ມີການລົງເລິກຢູ່ 2 ຮູບແບບ ຄື: ການທົດລອງໃນຮູບແບບກະສິກຳ ແລະ ປ່າໄມ້ ແລະ ການຟື້ນຟູປ່າໄມ້ໃນເຂດປ່າເລົ່າ. ໃນບັນດາຮູບແບບດັ່ງກ່າວ ແມ່ນກວມເອົາ ຫຼາຍກິດຈະກຳການຄົ້ນຄ້ວາ ເຊັ່ນ: ການນຳເອົາຊະນິດເຄື່ອງປ່າຂອງດົງທີ່ເປັນສິນຄ້າອອກມາປູກ, ໄມ້ອຸດສະຫະກຳ ແລະ ໄມ້ຊະນິດອື່ນໆ ທີ່ມີຄຸນສົມບັດໃນການຟື້ນຟູປ່າ, ບັນດາກິດຈະກຳເຫຼົ່ານີ້ ແມ່ນໄດ້ມີການລາຍງານຜົນຢ່າງເປັນໄລຍະ. ເຖິງຢ່າງໃດກໍ່ຕາມ, ການລາຍງານຄວາມຄືບໜ້າຂອງການຄົ້ນຄ້ວາ ແມ່ນຍັງຢູ່ໃນວົງແຄບ ແລະ ຍັງບໍ່ທັນມີຮູບແບບທີ່ແນ່ນອນ.

ສະນັ້ນ, ເພື່ອຢາກໃຫ້ຄວາມຄືບໜ້າຂອງການຄົ້ນຄ້ວາໄດ້ຖືກຮັບຮູ້ໃນວົງກວ້າງ ແລະ ມີຮູບແບບການລາຍງານຢ່າງເປັນລະບົບ ອັນທີ່ຈະສ້າງຄວາມເຂົ້າໃຈຢ່າງເລິກເຊິ່ງ ໃຫ້ແກ່ຜູ້ທີ່ເຮັດວຽກຮ່ວມກັບໂຄງການຍ່ອຍຄົ້ນຄ້ວາປ່າໄມ້ ໃນຊຸມປີຕໍ່ໜ້ານັ້ນ. ໂຄງການຍ່ອຍຄົ້ນຄ້ວາປ່າໄມ້ຈຶ່ງໄດ້ເຮັດປຶ້ມ ບົດລາຍງານຄວາມຄືບໜ້າຂອງກິດຈະກຳດ້ານປ່າໄມ້ຂຶ້ນ ໂດຍຈະເລີ່ມຕົ້ນສຳລັບ ກິດຈະກຳທີ່ໄດ້ມີການຈັດຕັ້ງປະຕິບັດ ໃນສົກປີ 2005 - 2006 ເນື່ອງຈາກວ່າຈະໄດ້ມີການລາຍງານ ຄວາມຄືບໜ້າແຕ່ຕົ້ນຈົນເຖິງ ປີສຸດທ້າຍຂອງແຕ່ລະກິດຈະກຳ.

ບົດລາຍງານຄວາມຄືບໜ້າສະບັບນີ້ ແມ່ນ ຈະໄດ້ກ່າວເຖິງ ການນຳໃຊ້ເຕັກນິກວິຊາການ, ການມີ ສ່ວນຮ່ວມຂອງປະຊາຊົນ ແລະ ຜົນກະທົບຂອງກິດຈະກຳຕໍ່ກັບການດຳລົງຊີວິດຂອງປະຊາຊົນ ໂດຍສະເພາະ ແມ່ນຄອບຄົວ ຜູ້ທີ່ເຂົ້າຮ່ວມກິດຈະກຳ.

ບົດລາຍງານສະບັບນີ້ ແມ່ນ ຖ້າວ່າມີສິ່ງໃດ ບໍ່ທັນເໝາະສົມ ຫຼື ມີລະບົບການລາຍງານຍັງຫາກມີຈຸດທີ່ຄວນຈະມີການ ເພີ່ມເຕີມ ຂໍໃຫ້ຜູ້ອານສາມາດໃຫ້ຄຳແນະນຳ ແກ່ ໂຄງການຍ່ອຍຄົ້ນຄ້ວາປ່າໄມ້ໄດ້ ເພື່ອຈະເຮັດລະບົບຂອງການລາຍງານ ມີເນື້ອໃນຢ່າງຊັດເຈນ ແລະ ເຂົ້າໃຈງ່າຍ, ບໍ່ມີເນື້ອໃນທີ່ສັບສົນ.

ສຸດທ້າຍຫວັງຢ່າງວ່າ ບົດລາຍງານສະບັບນີ້ ຈະສາມາດສ້າງຄວາມ ເຂົ້າໃຈ, ສ້າງແນວຄວາມຄິດ ແລະ ສ້າງຜົນປະໂຫຍດ ທາງດ້ານວິຊາການໃຫ້ແກ່ຜູ້ອ່ານບໍ່ຫຼາຍກໍ່ໜ້ອຍ ເຖິງຂະບວນການຄົ້ນຄ້ວາດ້ານປ່າໄມ້ ຂອງໂຄງການຍ່ອຍຄົ້ນຄ້ວາປ່າໄມ້ ໃນຊຸມປີຕໍ່ໜ້າ.

# ບົດສັງລວມຫຍໍ້

ປະຈຸບັນສັງຄົມໄດ້ມີການຂະຫຍາຍຕົວຢ່າງວ່ອງໄວ ໂດຍສະເພາະຈຳນວນປະຊາກອນ, ສະນັ້ນປ່າໄມ້ກໍ່ໄດ້ມີການປ່ຽນແປງຢ່າງວ່ອງໄວເຊັ່ນກັນ (ມີປະລິມານຫຼຸດລົງ) ສະນັ້ນ ເມື່ອປ່າໄມ້ໄດ້ມີພື້ນທີ່ຫຼຸດລົງ ຈຶ່ງມີຜົນກະທົບຕາມມາ ທັງໃນທາງກົງ ແລະ ທາງອ້ອມ ໂດຍສະເພາະ ແມ່ນມີຜົນກະທົບໂດຍກົງຕໍ່ກັບການດຳລົງຊີວິດການເປັນຢູ່, ຂອງປະຊາຊົນໃນຊົນນະບົດ.

ການຄົ້ນຄ້ວາດ້ານປ່າໄມ້ ແມ່ນມີຄວາມສຳຄັນຫຼາຍ ເພາະ ເປັນການຊອກຫາທາງເລືອກທີ່ດີ ໃນການນຳໃຊ້ຜົນປະໂຫຍດປ່າໄມ້ໃຫ້ມີຄວາມຍືນຍົງ ແລະ ການນຳໃຊ້ທີ່ດິນຢ່າງມີປະສິດທິຜົນ ໂດຍການ ນຳໃຊ້ຮູບແບບການປູກພືດໃນລະບົບກະສິກຳ-ປ່າໄມ້ ແລະ ພ້ອມທັງມີຮູບແບບການຈັດສັນປ່າໄມ້ບ້ານຢ່າງເປັນລະບົບ.

ໃນສົກ ປີ 2005-2006 ໂຄງການຍ່ອຍຄົ້ນຄ້ວາປ່າໄມ້ ແມ່ນດຳເນີນການຄົ້ນຄ້ວາມີ 07 ກິດຈະກຳ ຄື: ການ ປູກ ຢາງພາລາປະສົມກັບພືດກະສິກຳ, ການປູກໄມ້ເກດສະໜາ ປະສົມກັບເປືອກເມືອກ ແລະ ພືດອາຍຸສັ້ນ, ການປູກພືດແບບປະສົມປະສານຄືງທີ່ລະຫວ່າງໄມ້ສັກ, ປໍສາ ແລະ ພືດອາຍຸສັ້ນ, ການປູກເປືອກເມືອກໃນພື້ນທີ່ປ່າເລົ່າ, ການປູກໝາກແໜ່ງໃນພື້ນທີ່ປ່າເລົ່າ ແລະ ການວາງແຜນພັດທະນາປ່າໄມ້ບ້ານ ລົງເລິກວຽກປ່າໄມ້ຊຸມຊົນ. ຜົນໄດ້ຮັບໃນໄລຍະທຳອິດຂອງກິດຈະກຳດັ່ງກ່າວນັ້ນ ແມ່ນ ມີຂໍ້ດີ ແລະ ຂໍ້ເສຍດັ່ງນີ້ :

ຂໍ້ດີ : ແມ່ນຕົ້ນໄມ້ແຕ່ລະຊະນິດ ສາມາດມີການຈະເລີນເຕີບໄດ້ດີ ພ້ອມທັງ ການຂະຫຍາຍຕົວຂອງພືດກະສິກຳທີ່ໄດ້ປູກປະສົມ ແມ່ນ ມີຄວາມເໝາະສົມ.

ຂໍ້ເສຍ : ແມ່ນ ຄຸນນະພາບຂອງເບ້ຍທີ່ນຳມາປູກສ່ວນໃຫຍ່ ແມ່ນບໍ່ໄດ້ຄຸນນະພາບເທົ່າທີ່ຄວນ ເຊິ່ງເມື່ອປູກແລ້ວມີ ຕົ້ນຕາຍໃນຈຳນວນຫຼາຍ ໂດຍສະເພາະ ແມ່ນໄມ້ເກດສະໜາ, ເປືອກເມືອກ, ປໍສາ (ຢູ່ ເມືອງ ໂພນໄຊ) ເຊິ່ງປະຈຸບັນກິດຈະກຳການປູກ ໄມ້ເກດສະໜາ, ເປືອກເມືອກໃນພື້ນທີ່ປ່າເລົ່າ ແມ່ນຢຸດການເກັບກຳຂໍ້ມູນ. ສາຍເຫດທີ່ເບ້ຍໄມ້ບໍ່ໄດ້ຄຸນະພາບເນື່ອງຈາກວ່າ ການກະກຽມເບ້ຍບໍ່ຖືກກັບລະດູການ ແລະ ມີການນຳໃຊ້ເຕັກນິກ ທີ່ບໍ່ເໝາະສົມ.

ພ້ອມດຽວກັນການຈັດສັນປ່າໄມ້ບ້ານ ໂດຍການປູກເສີມກ້ອງປ່າ ແມ່ນໄລຍະທຳອິດໄດ້ຮັບຜົນດີ ແລະ ປະຊາຊົນກໍ່ໃຫ້ການຮ່ວມມືສູງ, ສຳລັບການຈັດສັນປ່າໄມ້ບ້ານ ແບບຄົບວົງຈອນ ແມ່ນກຳລັງໄດ້ມີການຈັດຕັ້ງປະຕິບັດ ທີ່ ບ້ານ ມີໄຊ ເມືອງ ນາໝໍ້ ແຂວງ ອຸດົມໄຊ ຊຶ່ງໂດຍລວມແມ່ນສັງເກດເຫັນວ່າ ປະຊາຊົນ ແມ່ນໃຫ້ການຮ່ວມມືດີ ແລະ ມີທ່າແຮງຫຼາຍໃນການຍົກລະດັບຊີວິດການເປັນຢູ່ຂອງປະຊາຊົນໃຫ້ດີຂຶ້ນ.

ບົດລາຍງານສະບັບນີ້ ແມ່ນຈະໄດ້ຖືກປັບປຸງ ຜົນຂອງຄວາມຄືບໜ້າຂອງແຕ່ລະກິດຈະກຳການຄົ້ນຄ້ວາໃນແຕ່ລະໄລຍະ ແລະ ມີຄວາມຕໍ່ເນື່ອງກັນ.

## 1. ພາກສະເໜີ

ບັນດາເຕັກໂນໂລຢີ ທີ່ມາເຮັດການຄົ້ນຄ້ວາແບບມີສ່ວນຮ່ວມ ກັບຊາວກະສິກອນ ສ່ວນຫຼາຍແມ່ນນຳເອົາບົດຮຽນການຄົ້ນຄ້ວາທີ່ປະສົບຜົນສຳເລັດມາຈາກບ່ອນອື່ນແລ້ວ ເພື່ອນຳເອົາມານຳໃຊ້ ເຂົ້າໃນການຄົ້ນຄ້ວາ ຮ່ວມກັບ ຊາວກະສິກອນນັ້ນເອງ. ບັນດາຮູບແບບເລົ່ານັ້ນ ແມ່ນມີຄວາມໜາຍຄືກັບນັກພັດທະນາ ຊຶ່ງມີຄວາມຈຳເປັນຕ້ອງ ໃຫ້ຄວາມ ສຳຄັນຫລາຍທີ່ສຸດ ໃນການເຂົ້າຮ່ວມ ຢ່າງຈິງຈັງ ຂອງຊາວກະສິກອນ ໃນການພັດທະນາເຕັກໂນໂລຢີ, ຊຶ່ງຈະມີຄວາມ ສອດຄ່ອງຢ່າງແທ້ຈິງກັບ ຄວາມຕ້ອງການ, ບຸລິມະສິດ ແລະ ສະພາບແວດລ້ອມຕົວຈິງຂອງຊາວກະສິກອນນັ້ນເອງ. ການຄົ້ນຄ້ວາຮ່ວມກັບຊາວກະສິກອນ ແມ່ນມີຈຸດປະສົງ ດັ່ງນີ້ : 1. ເພື່ອສົມທຽບ ລະຫວ່າງເຕັກໂນໂລຢີໃຫມ່ ທີ່ນຳເຂົ້າ ແລະ ເຕັກໂນໂລຢີຂອງຊາວກະສິກອນ ຫລື ປະເພນີທີ່ເຄີຍເຮັດມາ. 2. ເພື່ອທົດສອບເບິ່ງຫມາກຜົນຂອງເຕັກໂນໂລຢີໃຫມ່ ທີ່ນຳເຂົ້າໃນເງື່ອນໄຂຕົວຈິງ ຂອງຊາວກະສິກອນ ແລະ 3. ເພື່ອດັດປັບເຕັກໂນໂລຢີໃຫມ່ ທີ່ນຳເຂົ້າ ເພື່ອໃຫ້ມັນ ແທດເຫມາະກັບລະບົບການຜະລິດກະສິກຳຕົວຈິງ ຂອງຊາວ ກະສິກອນ.

ນອກຈາກເປັນການປັບປຸງເຕັກໂນໂລຢີ ຮ່ວມກັບຊາວກະສິກອນແລ້ວ, ພື້ນທີ່ ທີ່ເຮັດການຄົ້ນຄ້ວາຮ່ວມກັບຊາວກະສິກອນຍັງຈະກາຍເປັນບ່ອນສາທິດ ເພື່ອໃຫ້ຊາວກະສິກອນສາມາດສັງເກດເຫັນໄດ້ ລະບົບການກະສິກຳ ແລະ ປ່າໄມ້ ຮູບແບບປະສົມປະສານທີ່ໂດດເດັ່ນ. ພ້ອມດຽວກັນນີ້ມັນຍັງເປັນການປຸກຈິດສຳນຶກ ຫລື ລະດົມຊາວກະສິກອນ ໃນການເຮັດການທົດລອງກັບພືດຊະນິດໃຫມ່ ຫລື ເຕັກນິກອັນໃຫມ່ ອີກດ້ວຍ.

ໃນລະດູການຜະລິດ ຊ່ວງ ເດືອນ ເມສາ 2005 ຫາ ເດືອນ ມິຖຸນາ 2006, ໂຄງການຍ່ອຍຄົ້ນຄ້ວາປ່າໄມ້ ໄດ້ຈັດຕັ້ງປະຕິບັດກິດຈະກຳການຄົ້ນຄ້ວາຮ່ວມກັບຊາວກະສິກອນ ໃນ 07 ຫົວຂໍ້. ສິ່ງດັ່ງກ່າວນີ້ ມັນເປັນການຕອບສະໜອງ ຕາມຈຸດປະສົງຂອງໂຄງການຄົ້ນຄ້ວາກະສິກຳ ແລະ ປ່າໄມ້ເຂດພູດອຍຮ່ວມມື ລາວ-ຊູແອດ, ຊຶ່ງຈຸດປະສົງດັ່ງກ່າວນັ້ນແມ່ນ “ເພື່ອພັດທະນາ ເຕັກໂນໂລຢີ ທີ່ມີປະສິດຕິຜົນ ແລະ ໃຫ້ຂໍ້ສະເຫນີແນະໃນການຄົ້ນຄ້ວາ ແລະ ນຳໃຊ້ທີ່ດິນ ຊຶ່ງເປັນທີ່ຍອມຮັບຂອງຊາວກະສິກອນ ເພື່ອກ້າວໄປສູ່ການລົບລ້າງຄວາມທຸກຍາກ ແລະ ການນຳໃຊ້ແຫລ່ງຊັບພະຍາກອນທຳມະຊາດແບບຍືນນານ”

ບົດລາຍງານສະບັບນີ້ ໄດ້ສະເຫນີ ໃຫ້ເຫັນເຖິງຄວາມຄືບຫນ້າຂອງກິດຈະກຳ ການຄົ້ນຄ້ວາຮ່ວມກັບຊາວກະສິກອນ, ຄວາມກ່ຽວພັນ ແລະ ຢັ້ງຢືນໃນການອອກແບບເຕັກໂນໂລຢີ, ວິທີການນຳໃຊ້, ສິ່ງທີ່ໄດ້ຮັບຜົນໃນປັດຈຸບັນ ແລະ ສິ່ງທີ່ຈະຕ້ອງໄດ້ປັບປຸງຄືນໃຫມ່.

## 2. ພື້ນທີ່ຂອງໂຄງການ

ໂຄງການຄົ້ນຄ້ວາກະສິກຳ ແລະ ປ່າໄມ້ ເຂດພູດອຍຮ່ວມມື ລາວ- ຊູແອດ ກໍ່ຄືໂຄງການຍ່ອຍຄົ້ນຄ້ວາປ່າໄມ້ ໄດ້ຈັດຕັ້ງປະຕິບັດຢູ່ໃນ 2 ເມືອງ ໃນຈຳນວນ 10 ເມືອງ ທີ່ທຸກຍາກທີ່ສຸດ ໂດຍອີງຕາມການຈັດອັນດັບ ຈາກແຜນງານ ການແກ້ໄຂຄວາມທຸກຍາກແຫ່ງຊາດ (NGPEP 2003). ໃນນັ້ນລວມມີ: ເມືອງ ໂພນໄຊ, ແຂວງຫລວງພະ ບາງ ແລະ ເມືອງ

ນາຫມໍ້, ແຂວງອຸດົມໄຊ. ທັງ 2 ເມືອງດັ່ງກ່າວນີ້ ແມ່ນນອນຢູ່ໃນເຂດພາກເຫນືອຂອງ ສປປ.ລາວ ຊຶ່ງມີ ປະຊາຊົນຜູ້ ທຸກຍາກອາໃສຢູ່ ປະມານ 45% ຂອງຈຳນວນຜູ້ທຸກຍາກທັງຫມົດໃນທົ່ວປະເທດ.

ທີ່ເມືອງໂພນໄຊ, ໂຄງການຍ່ອຍຄົ້ນຄ້ວາປ່າໄມ້ ກຳລັງຈັດຕັ້ງປະຕິບັດກິດຈະກຳການຄົ້ນຄ້ວາທົດລອງ ຢູ່ໃນບັນດາບ້ານຕ່າງໆ ເຊັ່ນ: ຫ້ວຍມັນ, ນ້ຳບໍ່, ທ່າໂພໃຕ້, ທ່າໂພເຫນືອ, ແລະ ຫ້ວຍມະຫາ.

ທີ່ເມືອງນາຫມໍ້, ໂຄງການຍ່ອຍຄົ້ນຄ້ວາປ່າໄມ້ ກຳລັງຈັດຕັ້ງປະຕິບັດກິດ ຈະກຳການ ຄົ້ນຄ້ວາ ທົດລອງ ຢູ່ໃນບັນ ດາບ້ານຕ່າງໆ ເຊັ່ນ: ນາຫມໍ້ເຫນືອ, ໄຊສຳພັນ, ມີໄຊ, ປາງດູ່, ປາງທອງ, ບ້ານນາຫມໍ້ ໃຕ້ ແລະ ບ້ານກົກຟາດ.

ຊົນເຜົ່າຕ່າງໆ ທີ່ອາໃສຢູ່ເຂດບ້ານຈຸດສຸມຂອງໂຄງການລວມມີ: ລາວລຸ່ມ, ຂະມຸ ແລະ ລາວສູງ. ສ່ວນຊົນເຜົ່າ ທີ່ອາໃສຢູ່ເຂດບ້ານຕ່າງໆ ໃນເມືອງນາຫມໍ້ ລວມມີ : ລາວສູງ, ໄທດຳ, ພູຊາງ, ຂະມຸ.

ລັກສະນະພູມີປະເທດຂອງທັງ 2 ເມືອງແມ່ນເປັນພູເຂົາ ຊຶ່ງມີຄວາມຄ້ອຍຊັນຈາກລະດັບປານກາງ ຫາ ລະດັບສູງ ແລະ ປະກອບມີຮ່ອມພູທີ່ເປັນເຂດຕ່ຳ ຊຶ່ງສາມາດເຮັດນາໄດ້. ພື້ນທີ່ ທີ່ສາມາດເຮັດສວນປູກພືດຜັກ ແລະ ພືດໄລຍະສັ້ນ ແມ່ນຈະນອນຢູ່ຕາມເຂດລຽບແຄມແມ່ນ້ຳ ແລະ ພື້ນທີ່ເຂດຕ່ຳ. ໃນເຂດພື້ນທີ່ສູງຊັນ ສ່ວນໃຫຍ່ຈະເປັນພື້ນທີ່ຖາງປ່າເຮັດໄຮ່ ຊຶ່ງເປັນສາເຫດຫລັກເຮັດໃຫ້ເນື້ອທີ່ປ່າໄມ້ຫລຸດລົງ ແລະ ຄວາມອຸດົມສົມບູນຂອງດິນເຊື່ອມໂຊມ. ປະເພດດິນໃນເຂດເມືອງໂພນໄຊ ປະກອບມີ ປະເພດດິນດາກແຂງ ຈົນໄປຮອດດິນຊາຍແກມຕົມ ຊຶ່ງມີ ຄວາມອຸດົມສົມບູນຂອງດິນຈາກລະດັບກາງຫາລະດັບສູງ.

## 3. ຂໍ້ມູນພື້ນຖານຂອງແຜນງານຄົ້ນຄ້ວາ

| | |
|---|---|
| **ໜ່ວຍງານຄົ້ນຄ້ວາ** | ພະແນກ ຄຸ້ມຄອງການຄົ້ນຄ້ວາທົດລອງ<br>ສະຖາບັນຄົ້ນຄ້ວາກະສິກຳ ແລະ ປ່າໄມ້ |
| **ແຜນງານຄົ້ນຄ້ວາ** | ໂຄງການຄົ້ນຄ້ວາກະສິກຳ ແລະ ປ່າໄມ້ເຂດພູດອຍຮ່ວມມື ລາວ- ຊູແອດ |
| **ໄລຍະເວລາຈັດຕັ້ງປະຕິບັດ** | 2005 ຫາ 2006 |
| **ຈຸດປະສົງຂອງໂຄງການ** | 1). ພັດທະນາເຕັກໂນໂລຍີ ການຜະລິດ ແລະ ບົດແນະນຳ ທີ່ເຫມາະສົມ ໃນການຄຸ້ມຄອງ ແລະ ນຳໃຊ້ດິນ, ຊຶ່ງເປັນທີ່ຍອມຮັບຂອງຊາວກະສິກອນ ໃນເຂດພູດອຍ ເພື່ອແນໃສ່ຫລຸດຜ່ອນຄວາມທຸກຍາກຂອງປະຊາຊົນ ແລະ ການນຳໃຊ້ແຫລ່ງຊັບພະຍາກອນທຳມະຊາດແບບຍືນນານ.<br>2). ປັບປຸງຄວາມເຂັ້ມແຂງໃຫ້ແກ່ສະຖາບັນຄົ້ນຄ້ວາກະສິກຳ ແລະ ປ່າໄມ້ ແລະ ພາກສ່ວນອົງການຈັດຕັ້ງທ້ອງຖິ່ນ ທີ່ກ່ຽວພັນ ເພື່ອເສີມສ້າງຄວາມອາດ ສາມາດໃນການຄຸ້ມຄອງບໍລິຫານ ແລະ ການຈັດຕັ້ງປະຕິບັດການຄົ້ນຄ້ວາທົດລອງ ຢ່າງມີປະສິດຕິຜົນ. |

| | |
|---|---|
| | 3). ຕອບສະໜອງຂໍ້ມູນຂ່າວສານ, ຂໍ້ສະເໜີແນະ ແລະ ເຕັກໂນໂລຢີ ຕ່າງໆ ສຳລັບການວາງແຜນຄຸ້ມຄອງແຫລ່ງຊັບພະຍາກອນທຳມະຊາດ ແລະ ການປັບປຸງນະໂຍບາຍໃນຕໍ່ໜ້າ. |
| **ພາກສ່ວນຈັດຕັ້ງປະຕິບັດ** | ໂຄງການຍ່ອຍຄົ້ນຄ້ວາປ່າໄມ້ |
| **ຄາດໝາຍຜົນຮັບ** | 1). ພັດທະນາໃຫ້ໄດ້ເຕັກໂນໂລຢີ ແລະ ຂໍ້ສະເໜີແນະຕ່າງໆ ໂດຍອີງຕາມເຕັກນິກ ສະໄໝໃໝ່ ແລະ ຄວາມຮູ້ທ້ອງຖິ່ນ ເພື່ອຍົກສູງຜະລິດຕະພາບ ແລະ ຄວາມຍືນນານໃຫ້ແກ່ລະບົບ ການນຳໃຊ້ກະສິກຳ ແລະ ປ່າໄມ້ ໃນເຂດພູດອຍ.<br>2). ພະນັກງານຕ້ອງໄດ້ຮັບການຝຶກອົບຮົມກ່ຽວກັບວິທີການໃນການຄົ້ນຄ້ວາ ແລະ ການປະສານງານລະຫວ່າງການຄົ້ນຄ້ວາ ແລະ ການສົ່ງເສີມ ເພື່ອສາມາດສ້າງໃຫ້ເປັນທີມງານທີ່ປະກອບດ້ວຍວິຊາການຈາກຫລາຍສາຂາວິຊາ ແລະ ເຮັດວຽກງານຮ່ວມກັບພາກສ່ວນສົ່ງເສີມ ແລະ ຊາວກະສິກອນໄດ້ຢ່າງມີປະສິດຕິຜົນ.<br>3). ການຄົ້ນຄ້ວາໃນພື້ນທີ່ການຜະລິດຕົວຈິງຮ່ວມກັບປະຊາຊົນ ຕ້ອງຮັບປະກັນໃຫ້ໄດ້ຜົນການຄົ້ນຄ້ວາທີ່ດີ ຊຶ່ງມີຄວາມເໝາະສົມໃນການນຳເອົາໄປສົ່ງເສີມອອກສູ່ວົງກວ້າງ ໂດຍການເຜີຍແຜ່ໃຫ້ຊາວກະສິກອນ ໄດ້ນຳເອົາໄປໝູນໃຊ້ຢ່າງທັນເວລາ. |

## 4. ລາຍງານຄວາມຄືບໜ້າຜົນການຄົ້ນຄ້ວາ

| | | |
|---|---|---|
| 4.1. | **ຫົວຂໍ້ການຄົ້ນຄ້ວາ** | **ການປູກຊະນິດພັນຢາງພາລາ (77-4, GT1) ປະສົມພືດກະສິກຳ ( ສາລີ, ເຂົ້າ, ໝາກເດືອຍ, ໝາກງາ, ຖົ່ວເຫຼືອງ)** |

| | |
|---|---|
| **ປະເພດການຄົ້ນຄ້ວາ** | ການຄົ້ນຄ້ວາຢູ່ໃນພື້ນທີ່ການຜະລິດກະສິກຳ ຂອງຊາວກະສິກອນ ໃນສອງເມືອງຈຸດສູມຂອງໂຄງການ |
| **ຈຸດປະສົງ** | ເພື່ອໃຫ້ຮູ້ເຖິງຄວາມເໝາະສົມຂອງຊະນິດພັນຢາງພາລາ (77-4, GT1) ກັບສະພາບທ້ອງຖິ່ນ ໂດຍທີ່ສາມາດຈະເລີນເຕີບໂຕໄດ້ດີ ໃຫ້ຜົນຜະລິດສູງ ແລະ ເພື່ອປັບປຸງຊີວິດການເປັນຢູ່ຂອງຊາວກະສິກອນ ຄອບຄົວຂະໜາດນ້ອຍໃຫ້ດີຂຶ້ນ ຈາກຜົນຜະລິດຂອງພືດກະສິກຳ ໃນຊ່ວງໄລຍະເວລາກ່ອນການຂີດຢາງ. |
| **ບົດອະທິບາຍ ແລະ ຄວາມກ່ຽວພັນ** | ຂະບວນການປູກໄມ້ເປັນສິນຄ້າ ແມ່ນໜຶ່ງ ໃນຫຼາຍໂຄງການຂອງລັດຖະບານໄດ້ວາງອອກທີ່ມີເປົ້າໝາຍຫຼຸດຜ່ອນຄວາມທຸກຍາກຂອງປະຊາຊົນໃນປີ 2020 ແລະ ການຢຸດຕິການຖາງປ່າເຮັດໄຮ່ຢ່າງຂຶ້ນເຊີງ. ຢາງພາລາກໍ່ແມ່ນພືດເສດຖະກິດຊະນິດໜຶ່ງ ທີ່ກຳ ລັງ |

ປູກຢ່າງຫຼວງຫຼາຍ ແລະ ນັບມື້ນັບຂະຫຍາຍຕົວຢ່າງວ່ອງໄວ ອັນໄປຄຽງຄູ່ກັບການຄວາມຕ້ອງການຜະລິດຕະພັນຢາງໃນຕະຫຼາດໂລກ.

ເຖິງຢ່າງໃດກໍ່ຕາມ, ເພື່ອເປັນການຮັບປະກັນການນຳໃຊ້ທີ່ດິນໃຫ້ມີຄວາມຍືນຍົງ ຫຼື ຄົງ ທີ່ ໂດຍສາມາດຕອບສະໜອງຜົນຜະລິດແບບໝັ້ນຄົງ. ການປູກຢາງພາລາໃນລະບົບກະສິກຳ-ປ່າໄມ້ ແມ່ນທາງເລືອກໜຶ່ງທີ່ດີ ແລະ ຄຽງຄູ່ກັບປັດໃຈດັ່ງກ່າວນັ້ນ, ການໃຫ້ຜົນຜະລິດສູງ, ມີຄວາມເໝາະສົມ (ຈະເລີນເຕີບໂຕໄດ້ດີ) ໃນນັ້ນກໍ່ແມ່ນແນວພັນ 77-4, GT1 (ແກ້ວຄຳ ດວງມາລາ ພ້ອມ ຄະນະ, 2004) ກໍ່ມີຄວາມສຳຄັນ ທີ່ຊາວກະສິກອນຄອບຄົວຂະໜາດນ້ອຍຈະໄດ້ນຳໃຊ້.

ເນື້ອທີ່ດິນກະສິກຳໃນເຂດພາກເໜືອ ແມ່ນມີຢ່າງຈຳກັດ ແລະ ເປັນພື້ນທີ່ຄ້ອຍຊັນ ນັ້ນກໍ່ໝາຍຄວາມວ່າການປູກໄມ້ ໃນລະບົບກະສິກຳ-ປ່າໄມ້ ຈະເປັນຮູບແບບທີ່ມີຄວາມເໝາະສົມ ເພາະວ່າ ຈະໄດ້ຮັບຜົນປະໂຫຍດໄລຍະຍາວຈາກນ້ຳຢາງ ແລະ ເນື້ອໄມ້, ໄລຍະສັ້ນ ຈາກ ຜົນຜະລິດຂອງພືດກະສິກຳ ພ້ອມດຽວກັນ ດິນກໍ່ຈະໄດ້ຮັບການອະນຸລັກຮັກສາ ໃຫ້ມີ ຄວາມອຸດົມສົມບູນ, ສະນັ້ນໃນຫົວຂໍ້ການສຶກສານີ້ ແມ່ນຊ່ອງທາງໜຶ່ງທີ່ດີໃນການນຳ ໃຊ້ປະໂຫຍດເນື້ອທີ່ດິນໃຫ້ເກີດປະໂຫຍດສູງສຸດ.

**ຄາດໝາຍຜົນໄດ້ຮັບ**

ໄດ້ຂໍ້ແນະນຳວິຊາການຮູບແບບການປູກຢາງພາລາໃນລະບົບ ກະສິກຳ-ປ່າໄມ້, ສາມາດຢັ້ງຢືນໄດ້ເຖິງຄວາມ ເໝາະສົມກັບສະພາບທ້ອງຖິ່ນ ຂອງຊະນິດພັນຢາງພາລາ 77-4, GT1. ເປັນທາງອອກທີ່ດີ ໃນການສ້າງລາຍຮັບໃຫ້ແກ່ຜູ້ປູກຢາງ ຫຼື ປະຊາຊົນ ໂດຍທົ່ວໄປ.

**ການທົບທວນວຽກງານ**

ສະຖາບັນວິໄຈຢາງພາລາຂອງປະເທດໄທ, ໄດ້ມີປື້ມແນະນຳການປູກຢາງພາລາ ໃນພາກຕາເວັນອອກສ່ຽງເໜືອວ່າ ການປູກຢາງພາລາຄວນປູກພືດກະສິກຳສັບຫວ່າງ ເນື່ອງຈາກວ່າ ຈະເປັນການນຳໃຊ້ປະໂຫຍດທີ່ດິນຢ່າງເໝາະສົມ ແລະ ສາມາດສ້າງລາຍຮັບເສີມຈາກຜົນຜະລິດຂອງພືດ ແລະ ນອກຈາກນັ້ນຍັງຈະຊ່ວຍປົກຄຸມດິນບໍ່ໃຫ້ເສຍຄວາມຊຸ່ມຊື່ນ, ຫຼຸດຜ່ອນການໄຫຼບ່າໜ້າດິນ ໂດຍສະເພາະ ແມ່ນຢູ່ໃນພື້ນທີ່ ທີ່ມີຄວາມຄ້ອຍຊັນ ( ສະຖາບັນວິໄຈຢາງ, ກົມວິຊາການກະເສດ).

ໜ່ວຍງານຄຸ້ມຄອງ ແລະ ພັດທະນາຢາງພາລາ ຂອງແຂວງ ຫຼວງນ້ຳທາ (ບຸນທອນ ສີສະຫວັນ, 2006) ມີຜົນການສຳຫຼວດວ່າ ມີບາງຊະນິດພັນຢາງພາລາທີ່ບໍ່ມີຄວາມເໝາະສົມກັບດິນຟ້າອາກາດ ເຊັ່ນ: ແນວພັນ RRIM600 ແມ່ນສາມາດຈະເລີນເຕີບໂຕໄດ້ດີແຕ່ວ່າ ບໍ່ທົນຕໍ່ກັບນ້ຳໝອກກ້າມ (ໃນລະດູໜາວ). ແນວພັນ 77-4, GT1 ແມ່ນມີຄວາມເໝາະສົມກັບສະພາບດິນຟ້າອາກາດ ແລະ ສາມາດຈະເລີນເຕີບໂຕໄດ້ດີ, ພ້ອມດຽວກັນຍັງມີຄຳແນະນຳວ່າ ການປູກຢາງພາລາໃນພື້ນທີ່ຂອງຄອບຄົວຊາວກະສິກອນ ຂະໜາດ

ນ້ອຍ ຄວນປູກພືດກະສິກຳສັບຫວ່າງ ແລະ ສ້າງພັກຂັ້ນໄດຫາກ ພື້ນດິນມີຄວາມ ຄ້ອຍຊັນສູງ ກ່ວາ 15 ອົງສາ.

**ສະຫລຸບຜົນຮັບ**

ຜ່ານການສຳພາດ ໃນການເກັບກຳຂໍ້ມູນຄອບຄົວຊາວກະສິກອນ ທີ່ເຂົ້າຮ່ວມກິດຈະກຳໃນຕົ້ນ ປີ 2006 ເຫັນວ່າ ກິດຈະກຳການປູກຢາງພາລາ, ປະມານ 90 % ຂອງຄອບຄົວປະຊາຊົນລາວສູງໃນ ບ້ານ ປຸງເປົ້າ ແລະ ບ້ານ ຫ້ວຍມະຫາ ຢູ່ໃນເມືອງ ໂພນໄຊ ແມ່ນມີຄວາມສະໝັກໃຈເຂົ້າຮ່ວມ ແລະ ເມືອງນາໝໍ້ ກໍ່ເຊັ່ນດຽວກັນ.

ການປູກຢາງພາລາແມ່ນໄດ້ເລີ່ມຈັດຕັ້ງປະຕິບັດໃນຕົ້ນ ເດືອນ ມິຖຸນາ ປີ 2006, ປະຊາຊົນໃນແຕ່ລະ ບ້ານທີ່ເຂົ້າຮ່ວມມີຄວາມເອົາໃຈໃສ່ຫຼາຍ.

ຜ່ານການສຳຫຼວດເປີເຊັນການລອດຕາຍ ຂອງຢາງພາລາທັງສອງຊະນິດພັນ ພາຍຫຼັງທີ່ປູກໄດ້ 1 ເດືອນ ຄື: ໃນ ເມືອງ ນາໝໍ້ ເປີເຊັນການລອດຕາຍ ຂອງຊະນິດພັນ 77-4 ເທົ່າກັບ 59 ສ່ວນຮ້ອຍ ຂອງຈຳນວນຕົ້ນໄມ້ທີ່ປູກ ແລະ GT1 ເທົ່າກັບ 82 ສ່ວນຮ້ອຍ. ເມືອງໂພນ ໄຊ ເປີເຊັນການລອດຕາຍຂອງຊະນິດພັນ 77-4 ເທົ່າກັບ 51 ສ່ວນຮ້ອຍ ແລະ GT1 ເທົ່າກັບ 66 ສ່ວນຮ້ອຍ.

ໂດຍລວມທັງສອງເມືອງ ຈະເຫັນໄດ້ວ່າ ຊະນິດພັນ GT1 ມີເປີເຊັນການລອດຕາຍສູງກ່ວາ ຊະນິດພັນ 77-4 ທັງນີ້ອາດຈະໄດ້ຮັບຜົນກະທົບຈາກສະພາບແວດລ້ອມຕ່າງໆຂອງພື້ນທີ່ ເຊັ່ນ ພາຍຫຼັງການການປູກຝົນບໍ່ຕົກຕິດຕໍ່ກັນຫຼາຍວັນ, ປວກເຂົ້າທຳລາຍ, ເບ້ຍຢາງບໍ່ໄດ້ຄຸນນະພາບເທົ່າທີ່ຄວນ, ນອກຈາກນັ້ນ ເຫງົ້າ ຈຳນວນໜຶ່ງ ແມ່ນໄດ້ຮັບຜົນກະທົບຈາກການຂົນສົ່ງ ເປັນຕົ້ນແມ່ນຕາທີ່ຕິດລົອອກ ແລະ ເຫງົ້າ ຢາງກໍ່ມີຄວາມແຂງແຮງຕໍ່າ. ຢ່າງໃດກໍ່ດີ ສຳລັບຕົ້ນທີ່ລອດຕາຍ ທັງ 2 ຊະນິດພັນ ແມ່ນ ມີການຈະເລີນເຕີບໄດ້ດີ.

ສຳລັບພືດກະສິກຳ ໂດຍສ່ວນໃຫຍ່ ແມ່ນມີການຈະເລີນເຕີບໂຕໄດ້ດີ ທັງສອງເມືອງ, ສຳລັບແນວພັນສາລີທີ່ໄດ້ປູກຢູ່ເມືອງ ນາໝໍ້ ບາງຄອບຄົວບໍ່ສາມາດຂະຫຍາຍຕົວໄດ້ ຍ້ອນໜູເຂົ້າກັດກິນຍອດ.

**ສະຖານທີ່**

ໃນພື້ນທີ່ການສຶກສາ ແມ່ນໄດ້ກວມເອົາທັງສອງເມືອງຄື: ເມືອງ ນາໝໍ້ ມີ ບ້ານ ນາໝໍ້ເໜືອ 3 ຄອບຄົວ, ນາໝໍ້ໃຕ້ 2 ຄອບຄົວ ແລະ ບ້ານ ປາງດູ່ 2 ຄອບຄົວ. ເມືອງ ໂພນໄຊ ມີ ບ້ານ ປຸງເປົ້າ 6 ຄອບຄົວ ແລະ ບ້ານ ຫ້ວຍມະຫາ 4 ຄອບຄົວ.

**ວິທີການ**

ໃນການຄົ້ນຄ້ວາທົດລອງແມ່ນ ໄດ້ນຳມາເອົາການຈະເລີນເຕີບໂຕຂອງ ທັງສອງຊະນິດພັນ ມາເປັນຕົວປຽບທຽບ ສະນັ້ນ ສິ່ງທົດລອງແມ່ນໄດ້ກຳນົດເປັນ 2 ຢ່າງຄື :

$T_1$ = ການປູກຢາງພາລາ ຊະນິດພັນ 77-4 ປະສົມພືດກະສິກຳ

$T_2$ = ການປູກຢາງພາລາ ຊະນິດພັນ GT1 ປະສົມພືດກະສິກຳ

.

ໃນການອອກແບບການຄົ້ນຄ້ວາທົດລອງນຳໃຊ້ ລະບົບແບບສຸ່ມຕົວຢ່າງໃນດອນສົມບູນ RCBD. ຊຶ່ງ ເມືອງ ນາໝໍ້ ແບ່ງອອກເປັນ 3 ຊໍ້າ ແລະ ເມືອງ ໂພນໄຊ ໄດ້ແບ່ງອອກເປັນ 4 ຊໍ້າ

ການເກັບກຳຂໍ້ມູນແມ່ນໄດ້ລວມ ມີ:
ການຈະເລີນເຕີບໂຕທາງດ້ານລວງສູງ ແລະ ໜ້າຕ້າງ ຂອງ 2 ຊະນິດພັນ ແລະ ຜົນຜະລິດຂອງ ພືດກະສິກຳ ທີ່ປູກສັບຫວ່າງ ແລະ ແນວຄວາມຄິດຂອງຊາວກະສິກອນຕໍ່ ກັບສວນຢາງພາລາຂອງເຂົາເຈົ້າເອງ.

**ແຜນກິດຈະກຳສຳລັບ ສົກປີ 2006-2007**

ລົງເກັບກຳຂໍ້ມູນການຈະເລີນເຕີບໂຕທາງດ້ານລວງສູງ ແລະ ໜ້າຕ້າງ ຂອງຕົ້ນຢາງຄັ້ງທຳອິດ ແລະ ຜົນຜະລິດຂອງພືດກະສິກຳ.

ການປູກພືດກະສິກຳ ແມ່ນມີຄວາມຈຳເປັນທີ່ຈະຕ້ອງໄດ້ປູກໃນໄລຍະ 3 ປີ ສະນັ້ນ ຈະຕ້ອງໄດ້ອະທິບາຍເຖິງການນຳເອົາພືດກະສິກຳ ທີ່ເປັນເສດຖະກິດເຂົ້າໄປປູກ ສັບຫວ່າງ ໃນປີຕໍ່ໜ້າ ໃຫ້ແກ່ປະຊາຊົນເພື່ອທີ່ຈະໄດ້ມີການກະກຽມແນວພັນພືດ ໄດ້ທ່ວງທັນກັບເວ ລາ.

**ແຜນວຽກ**

| 2006 ຫາ 2007 | ຕຸລາ | ພະຈິກ | ທັນວາ | ມັງກອນ | ກຸມພາ | ມີນາ | ເມສາ | ພຶດສະພາ | ມິຖຸນາ | ກໍລະກົດ | ສິງຫາ | ກັນຍາ | ຜູ້ຮັບຜິດຊອບ |
|---|---|---|---|---|---|---|---|---|---|---|---|---|---|
| **ພາກຫ້ອງການ** | | | | | | | | | | | | | |
| ວາງແຜນ | | x | | | | | x | | | | | | FRC |
| ວິເຄາະຂໍ້ມູນ | | | | x | | | x | | | | | x | FRC |
| ຂຽນບົດລາຍງານ | | | | x | | | | | x | | | | FRC |
| ນຳສະເໜີຜົນ | | | | x | | | | | x | | | | FRC |
| **ວຽກງານພາກສະໜາມ** | | | | | | | | | | | | | |
| ເກັບກຳຂໍ້ມູນ | | x | x | | | | X | | | | | x | FRC, NAFReC NM&PX |
| ປູກສ້ອມ | | | | | | | | | x | | | | NAFReC |
| ປູກພືດກະສິກຳ | | | | | | | | X | x | | | | NAFReC |

**ພະນັກງານເຂົ້າຮ່ວມ** ສົມອອນ ວົງຄໍາຣ (FRC), ສົມບູນ (NAFReC), ສຸລິວັນ ວັນນະສຸກ (ຫ້ອງການສົ່ງເສີມກະສິກໍາ ແລະ ປ່າໄມ້ ເມືອງ ນາຫມໍ້), ຄໍາພັດ ສີລິປະເສີດ (ຫ້ອງການ ສົ່ງເສີມກະສິກໍາ ແລະ ປ່າໄມ້ເມືອງ ໂພນໄຊ)

**ງົບປະມານຄາດຄະເນ** 80,000,000 ກີບ ( ໂຄງການ 4 ປີ )

**ສະຖານະພາບປະຈຸບັນ** ປະຈຸບັນຕົ້ນຢາງພາລາ ແມ່ນສາມາດຈະເລີນເຕີບໂຕໄດ້ດີ ແຕ່ວ່າ ມີຕົ້ນຕາຍ ຈໍານວນໜຶ່ງທີ່ຈະຕ້ອງໄດ້ປູກສ້ອມຄືນ ໃນ ປີ 2007 ເພື່ອທົດແທນຄືນສໍາລັບຈໍານວນຕົ້ນທີ່ໄດ້ຕາຍໄປ ແລະ ພ້ອມດຽວກັນນັ້ນ ໃນສວນຢາງພາລາຍັງຈະໄດ້ສືບຕໍ່ໃນການປູກພືດ ແບບປະສົມປະສານ, ເປັນຕົ້ນ ແມ່ນ ຊະນິດພັນພືດທີ່ເປັນເສດຖະກິດໃນທ້ອງຖິ່ນນັ້ນໆ ເຊິ່ງການປູກພືດດັ່ງກ່າວ ແມ່ນຈະຕ້ອງໄດ້ດໍາເນີນໄປພາຍໃນໄລຍະ 3 ປີ ທໍາອິດ. ນອກຈາກນັ້ນກິດຈະກໍາດັ່ງກ່າວແມ່ນຈະໄດ້ດໍາເນີນການຕິດຕາມ ແລະ ເກັບກໍາຂໍ້ມູນ ທາງດ້ານຈະເລີນເຕີບໂຕຂອງຕົ້ນຢາງພາລາ ( 1 ຄັ້ງ/ປີ )

## 4.2. ຫົວຂໍ້ຄົ້ນການຄ້ວາ : ການປູກເສີມກ້ອງປ່າຊົມໃຊ້ບ້ານ ດ້ວຍເບ້ຍໄມ້ 4 ຊະນິດ ( ຢາງບົງ, ແຕ້ຄ່າ, ດູ່, ແລະ ຂົມຝາດ )

**ປະເພດການຄົ້ນຄ້ວາ** ການຄົ້ນຄ້ວາໃນພື້ນທີ່ ປ່າຊົມໃຊ້ລວມ ຂອງ ບ້ານ

**ຈຸດປະສົງ** ເພີ້ມຄວາມອຸດົມສົມບູນໃຫ້ແກ່ປ່າຊົມໃຊ້ຂອງບ້ານ, ມີໄມ້ທີ່ມີຄຸນຄ່າໄວ້ໃຊ້ ແລະ ສ້າງລາຍຮັບໃຫ້ ບ້ານ ໃນອານາຄົດ.

**ບົດອະທິບາຍ ແລະ ຄວາມກ່ຽວພັນ** ດັ່ງທີ່ຮູ້ນໍາກັນແລ້ວວ່າ ການປົກຄຸມນັບມື້ນັບຫຼຸດລົງຢ່າງໜ້າວິຕົກຈາກ 47 % ແຕ່ກ່ອນປະຈຸບັນຍັງພຽງ 41 %. ສະນັ້ນ, ການປູກໄມ້ ແມ່ນກິດຈະກໍານຶ່ງທີ່ປະກອບສ່ວນເຂົ້າໃນແຜນງານ ການຢຸດຕິການຖາງປ່າເຮັດໄຮ່ ແລະ ແຜນງານຄຸ້ມຄອງປ່າໄມ້ໃຫ້ຍືນຍົງ ດັ່ງບ້ານຈຸດສຸມໃນເມື່ອກ່ອນແມ່ນມີໄມ້ທີ່ມີຄ່າຫຼາຍຊະນິດ ແຕ່ຍ້ອນການນໍາໃຊ້ໄມ້ແບບຊະຊາຍ ແລະ ການຖາງສວນເຂົ້າຜົນຕາມມາກໍຄື:ໄມ້ປຸກສ້າງເຮືອນ, ໄມ້ໃຊ້ສອຍບໍ່ມີໆ ມີພຽງແຕ່ໄມ້ປ່ອງ ແລະ ໄມ້ທີ່ບໍ່ມີຄຸນຄ່າທາງດ້ານເສດຖະກິດ. ສະນັ້ນຈິ່ງ ຫຼິ່ງເຫັນຄວາມສໍາຄັນ ແລະ ຈໍາເປັນຕ້ອງໄດ້ປູກທົດແທນຄືນ ໂດຍພ້ອມຈິດພ້ອມໃຈກັນ ຮ່ວມມືກັບໂຄງການປະຕິບັດວຽກງານປູກເສີມນີ້ໃຫ້ສໍາເລັດຢ່າງມີປະສິດຕິຜົນດີ ຈິ່ງຈະມີຊັບພະຍາກອນປ່າໄມ້ເພີ້ມຂຶ້ນ.

**ຄາດຫມາຍຜົນຮັບ** ໄດ້ຂໍ້ແນະນໍາທາງດ້ານວິຊາການ ກ່ຽວກັບເຕັກນິກວິຊາການ, ຮູບແບບຂອງການປູກເສີມກ້ອງປ່າ ດ້ວຍໄມ້ທີ່ມີຄຸນຄ່າທາງດ້ານເສດຖະກິດ. ໄດ້ຕົວແບບຂອງການຟື້ນຟູປ່າໄມ້

ຊົມໃຊ້ບ້ານ ທີ່ມີຄຸນນະພາບ ໃຫ້ແກ່ປະຊາຊົນ ບ້ານອ້ອມຂ້າງຖອດຖອນບົດຮຽນ ເພື່ອນຳໄປໃຊ້ ໃນພື້ນທີ່ຂອງ ຕົນໃນຕໍ່ໜ້າ.

**ການທົບທວນວຽກງານ**

ລັດຖະບານ ໂດຍສະເພາະ ແມ່ນ ກະຊວງກະສິກຳ ແລະ ປ່າໄມ້ ໄດ້ວາງຍຸດທະສາດປ່າໄມ້ ທີ່ມີເປົ້າໝາຍເລັ່ງ ເພີ່ມຄວາມປົກຫຸ້ມຂອງປ່າໃຫ້ເຖິງ 70% ໃນ ປີ 2020. ໂດຍເອົາວຽກງານ ການຟື້ນຟູປ່າ ແລະ ການນຳໃຊ້ປ່າໄມ້ໃຫ້ມີຄວາມຍືນຍົງ ອັນທີ່ໄດ້ເກີດປະໂຫຍດສູງສຸດ ໃຫ້ແກ່ປະຊາຊົນ ໂດຍສະເພາະ ແມ່ນປະຊາຊົນໃນຊົນນະບົດ.

ສູນວິໄຈປ່າໄມ້ ຂອງປະເທດໄທ, ພ.ສ 2535 ໄດ້ມີຜົນການສຶກສາວ່າການປູກໄມ້ໃນເຂດ ພື້ນທີປ່າໄມ້ຂອງຊຸມຊົນ ທີ່ໄດ້ຈັດຕັ້ງປະຕິບັດຈາກລັດ ໂດຍມີປະຊາຊົນເຂົ້າຮ່ວມແມ່ນໄດ້ຮັບຄວາມສຳເລັດສູງ ເນື່ອງຈາກຊາວບ້ານໃນຊຸມຊົນໄດ້ສ່ວນຮ່ວມໃນການປົວລະບັດຮັກສາ, ທີ່ມີເປົ້າໝາຍແນໃສ່ ຄື: ເພື່ອຍົກລະດັບ ຊີວິດການເປັນຢູ່ ຂອງປະຊາຊົນ ເນື່ອງຈາກວ່າ ຕົ້ນໄມ້ສາມາດໃຫ້ປະໂຫຍດມີ ຄື: ໄມ້ສາມາດນຳມາເປັນເຊື້ອເພີງ, ຕົ້ນໄມ້ ຫຼື ປ່າໄມ້ ສາມາດໃຫ້ອາຫານ ແລະ ຜົນຜະລິດຈາກປ່າໄມ້.
ສູນຄົ້ນຄ້ວາປ່າໄມ້ ໄດ້ມີການດຳເນີນໂຄງການຟື້ນຟູປ່າທຳມະຊາດ ໂດຍການໃຫ້ທຶນຂອງ ASEAN- Korea ແຕ່ 2000-2005, ໄດ້ມີຂໍ້ສະຫຼຸບວ່າ ການຟື້ນຟູປ່າໄມ້ໂດຍການປູກເສີມ ກ້ອງປ່າຂອງຊະນິດໄມ້ພື້ນເມືອງ (ໄມ້ຍາງນາ, ບາກ, ແຄນ, ແຕ້ຄ່າ ແລະ ໄມ້ດູ່) ແມ່ນໄດ້ຮັບຜົນດີຫຼາຍ, ເພາະວ່າ ຕົ້ນໄມ້ສາມາດຈະເລີນເຕີບໂຕໄດ້ດີ.

**ສະຫລຸບຜົນຮັບ**

ຜ່ານການປະຕິບັດວຽກງານຕົວຈິງ ເຫັນວ່າປະຊາຊົນມີຄວາມພໍໃຈ ຕໍ່ກັບກິດຈະກຳການປູກເສີມກ້ອງປ່າ ( ຟື້ນຟູປ່າ ) ດ້ວຍເບ້ຍ 4 ຊະນິດ ເນື່ອງຈາກວ່າການສຳຫຼວດການຕາຍຂອງເບ້ຍໄມ້ທີ່ປູກພາຍຫຼັງ ນຶ່ງເດືອນ ການຕາຍຂອງເບ້ຍໄມ້ໜ້ອຍຫຼາຍເຊິ່ງສະແດງອອກໃນຕົວເລກລວມດັ່ງ ນີ້:
ກ.ເມືອງ ໂພນໄຊ ປູກໃນດອນ 1008 ຕົ້ນ
- ບ້ານ ທ່າໂພ ຕົ້ນໄມ້ຕາຍ 112 ຕົ້ນ ( 15,5 % )
- ບ້ານ ນາ້ ບໍ່ ຕົ້ນໄມ້ຕາຍ 10 ຕົ້ນ ( 7,12 % )

ໃນນັ້ນເມືອງ ໂພນໄຊ ແມ່ນໄມ້ຂົມຝາດຕາຍຫຼາຍຍ້ອນການຜະລິດເບ້ຍໄມ້ ແມ່ນເບົ້າໃຫຍ່ ແລະ ເປີເຊັນຂອງດິນຊາຍຫຼາຍເວລາແກະເອົາ ຖົງຢາງອອກແມ່ນເບົ້າແຕກກ່ອນປູກ, ລຳຕົ້ນຂອງເບ້ຍໄມ້ຂົມຝາດ ອອ່ນແອ ຫັກງາຍ ເພາະບໍ່ໄດ້ເອົາອອກແດດ ກ່ອນປູກ 1 ເດືອນ.

ຂ. ເມືອງ ນາໝໍ້ ປູກໃນດອນ 288 ຕົ້ນ
- ບ້ານ ກົກຝາດ ຕົ້ນໄມ້ຕາຍ 25 ຕົ້ນ ( 8.7 % ) ໃນນັ້ນແມງກັດ 5 ຕົ້ນ

ໃນເມືອງນາໝໍ້ເບ້ຍຂີ້ມຝາດຕາຍຫລາຍຍ້ອນເບ້ຍນ້ອຍ ແລະ ແມງກັດຄໍຮາກ ດັ່ງນັ້ນ ຄວນເອົາເບ້ຍໄມ້ໃຫ່ຍກ່ວານີ້ ມາປູກເພື່ອປ້ອງກັນແມງກັດ.

ສະນັ້ນ,ໂດຍສັງລວມແລ້ວປະຊາຊົນແມ່ນມີຄວາມກະຕືລືລົ້ນດີກ່ຽວກັບການປູກເສີມກ້ອງປ່າຊົມໃຊ້ ບ້ານ ເຊິ່ງສະແດງອອກ ການປະກອບສ່ວນວຽກງານ ຢ່າງຫ້າວຫັນດີ ແລະ ຢາກຂະຫຍາຍເນື້ອທີ່ປູກອອກຕື່ມອີກໃນປີຕໍ່ໄປ ເຖິງແມ່ນວ່າຜົນຕອບສະໜອງໄລຍະຍາວກໍ່ຕາມ ແຕ່ກໍ່ເປັນວຽກງານທີ່ດີໃນການສະກັດກັ້ນການຖາງປ່າເຮັດໄຮ່ ແລະ ຮັກສາເນື້ອທີ່ ປ່າໄມ້ໃຫ້ໝັ້ນຄົງ.

**ສະຖານທີ່** ການສຶກສາດັ່ງກ່າວນີ້ ຈະສືບຕໍ່ຈັດຕັ້ງປະຕິບັດຢູ່ ບ້ານ ທ່າໂພ, ນ້ຳບໍ່ ທີ່ເມືອງໂພນໄຊ. ແຂວງ ຫຼວງພະບາງ ແລະ ບ້ານ ກິກຝາດ, ເມືອງ ນາໝໍ້ ແຂວງ ອຸດົມໄຊ.

**ວິທີການ** ການສຶກສານີ້ມີລາຍລະອຽດ, ດັ່ງນີ້ :

- ຊະນິດພັນໄມ້ ອີງໃສ່ປະຫວັດພື້ນຖານຂອງບ້ານ ແລະ ອີງໃສ່ຄວາມມັກຂອງບ້ານ
- ໄລຍະປູກ 3 x 6 ມ
- ໃຊ້ວິທີແບບ ສຸ່ມຕົວຢ່າງ ໃນ 1 ຮຕ ເອົາຂໍ້ມູນ 30 %
- ເນື້ອທີ່ຂອງດອນເກັບກຳຂໍ້ມູນ ເທົ່າກັບ 33 ມ x 18 ມ = 594 ຕາແມັດ
- ໃນ 1 ຮຕ ມີ 3 ດອນ ທົດລອງ , ແຕ່ລະດອນມີເບ້ຍໄມ້ 48 ເບ້ຍ/ 4 ຊະນິດ

ກ. ເມືອງ ໂພນໄຊ

| ລ/ດ | ຊື່ບ້ານ | ເນື້ອທີ່ ຮຕ | ຊະນິດເບ້ຍໄມ້ທີ່ປູກ | | | | ໝາຍເຫດ |
|---|---|---|---|---|---|---|---|
| | | | ຢາງບົງ | ແຕ້ຄ່າ | ດູ່ | ຂີ້ມຝາດ | ເກັບກຳຂໍ້ມູນ 30 % ໃນ 4 ຊະນິດໃນດອນທົດລອງ |
| 1 | ບ ທ່າໂພ | 5 | 1000 | 500 | 100 | 205 | |
| 2 | ບ ນ້ຳບໍ່ | 2 | 376 | 300 | 100 | 346 | |
| ລວມ | | 7 | 1376 | 800 | 200 | 551 | |

ຂ. ເມືອງ ນາໝໍ້

- ໄລຍະຫ່າງການປູກ 6 ມ x 3ມ
- ໃຊ້ວິທີແບບສຸ່ມຕົວຢ່າງ ເກັບກຳຂໍ້ມູນ 30 % / ຮຕ
- ເນື້ອທີ່ດອນທົດລອງ 18 ມ x 33 ມ = 594 ຕາແມັດ

| ລ/ດ | ຊື່ ບ້ານ | ເນື້ອທີ່ ຮຕ | ຊະນິດໄມ້ທີ່ປູກ | | | ໝາຍເຫດ |
|---|---|---|---|---|---|---|
| | | | ເກດສະໜາ | ແຕ້ຄ່າ | ຂີ້ມຝາດ | |
| 1 | ບ ກິກຝາດ | 2 | 320 | 320 | 320 | ເກັບກຳຂໍ້ມູນ 30 % ໃນ |
| ລວມ | | 2 | 960 ( ຕົ້ນ ) | | | 3 ຊະນິດ ໃນດອນທົດລອງ |

ໃນພາກປະຕິບັດແມ່ນເຮັດຮ່ວມກັບ ຊາວບ້ານ ແລະ ການຈັດຕັ້ງ ໃນແຕ່ລະບ້ານ.
ການອອກແບບທາງ ດ້ານສະຖິຕິແມ່ນ ນຳໃຊ້ລະບົບ Sestematic.
ຂໍ້ມູນທີ່ຈະຕ້ອງເກັບກຳ ລວມມີ:
ການຈະເລີນເຕີບໂຕ, ການຕາຍຂອງຕົ້ນໄມ້ 4 ຊະນິດ ທີ່ປູກ

**ແຜນກິດຈະກຳສຳລັບ ປີ 2006 - 2007**

ລາຍລະອຽດວຽກງານດັ່ງລຸ່ມນີ້

| 2006- 2007 | ຕຸລາ | ພະຈິກ | ທັນວາ | ມັງກອນ | ກຸມພາ | ມີນາ | ເມສາ | ພຶດສະພາ | ມິຖຸນາ | ກໍລະກົດ | ສິງຫາ | ກັນຍາ | ຜູ້ຮັບຜິດຊອບ |
|---|---|---|---|---|---|---|---|---|---|---|---|---|---|
| <u>ວຽກຫ້ອງການ</u> | | | | | | | | | | | | | |
| ຂຶ້ນແຜນ - ສະຫຼຸບແຜນ | | x | X | | | | | | | | | | FRC |
| <u>ວຽກພາກສະໜາມ</u> | | | | | | | | | | | | | |
| ເກັບກຳຂໍ້ມູນການເຕີບໂຕ | | | X | | | | | | | | | | FRC, NAFReC, NM&PX |
| ສ້າງລະບຽບປົກປັກຮັກສາ | | | X | | | | | | | | | | FRC, NAFReC, NM&PX |
| ຂຽນບົດລາຍງານ ປ້ອນຂໍ້ມູນ | | | X | x | | | | | | | | | FRC |
| ຕິດຕາມການບົວລະບັດ | | | | | | | X | | | | | | PX |
| ບົດລາຍງານທ້າຍປີ | | | | | | | | | | | x | | FRC |

**ພະນັກງານເຂົ້າຮ່ວມ** ທ ໄລຄຳ ສີຫານາດ ສູນຄົ້ນຄ້ວາປ່າໄມ້, ນ ພອນທິບ ທອງດາ ສູນຄົ້ນຄ້ວາກະສິກຳ-ປ່າໄມ້ ພາກເໜືອ, ທ ສາຍສະໝອນ ຫ້ອງການປະສານງານ ເມືອງ ໂພນໄຊ, ທ ຄຳຫລ້າ ຫ້ອງການປະສານງານ ເມືອງ ນາໝໍ້

**ງົບປະມານຄາດຄະເນ :** 86. 000 000 ກີບ ( ໂຄງການ 3 ປີ )

**ສະຖານະພາບ** ໂດຍລວມແລ້ວທັງ 2 ເມືອງ ການຈະເລີນເຕີບໂຕຂອງຕົ້ນໄມ້ທີ່ປູກ ແມ່ນ ດີ. ສະນັ້ນ ໃນ ຫົວຂໍ້ນີ້ແມ່ນຈະໄດ້ມີ ການລົງເກັບກຳຂໍ້ມູນ ປີລະ 1 ເທື່ອ.

## 4.3. ຫົວຂໍ້ຄົ້ນການຄ້ວາ ການປູກໄມ້ເກດສະໜາ ແລະ ເປືອກເມືອກແບບປະສົມປະສານໃນພື້ນທີ່ດິນຄ້ອຍຊັນໃນລະບົບ Agro Forestry ແລະ Farm Forestry

**ຈຸດປະສົງ**

ເພື່ອສົມທຽບການປູກໄມ້ເກດສະໜາ ກັບເປືອກເມືອກແບບປະສົມປະສານ ລະຫວ່າງສອງຮູບແບບທາງດ້ານການຈະເລີນເຕີບໂຕ, ການສ້າງລາຍຮັບ ແລະ ເປັນທີ່ຍອມຮັບຂອງຊາວກະສິກອນ.

**ບົດອະທິບາຍ ແລະ ຄວາມກ່ຽວພັນ**

ພັກ ແລະ ລັດຖະບານ ຂອງ ສປປ ລາວ ໄດ້ວາງແຜນຍຸດທະສາດທີ່ມີເປົ້າໝາຍ ເພື່ອຢຸດຕິການຖາງປ່າເຮັດໄຮ່ແບບເຄື່ອນຍ້າຍໄດ້ຢ່າງຊິ້ນເຊີງ ໃນປີ 2010 ແລະ ການພັດທະນາກະສິກຳ ແລະ ປ່າໄມ້ ແຕ່ປີ 2006 ເຖິງ 2010 ໂດຍສຸມໃສ່ການສົ່ງເສີມ ແລະ ຊຸກຍູ້ແຮງງານການຜະລິດສິນຄ້າ ເພື່ອແກ້ໄຂຄວາມທຸກຍາກ ເປັນຕົ້ນ ແມ່ນ ການປູກພືດ, ລ້ຽງສັດ, ປູກໄມ້ອຸດສະຫະກຳ ແລະ ບາງຊະນິດເຄື່ອງຂອງດົງ ທີ່ເປັນສິນຄ້າ (ວາລະສານກະສິກຳ ແລະ ປ່າໄມ້, 2005)

ໄມ້ເກດສະໜາເປັນໄມ້ຊະນິດໜຶ່ງ ຊຶ່ງໃນອາດີດກໍ່ຄືປະຈຸບັນ ແມ່ນຕະຫລາດມີຄວາມຕ້ອງການສູງ ໃນໄລຍະຜ່ານມາແມ່ນໄດ້ມີການຂຸດຄົ້ນຈາກປ່າທຳຊາດ ແລະ ໃນປະຈຸບັນແມ່ນໃກ້ຈະສູນພັນ ແລະ ບໍ່ພຽງພໍຕໍ່ຄວາມຕ້ອງການຂອງຕະຫລາດ ໃນນັ້ນເປືອກເມືອກ ກໍ່ເຊັ່ນດຽວກັນຜ່ານມາກໍ່ ເປັນສິນຄ້າຂາອອກປະເພດເຄື່ອງປ່າຂອງດົງຊະນິດໜຶ່ງທີ່ສ້າງລາຍຮັບໃຫ້ແກ່ຊາວກະສິກອນ ແຕ່ການຂຸດຄົ້ນແມ່ນໄດ້ມາຈາກປ່າທຳມະຊາດ

ທ່າແຮງຄວາມຕ້ອງການຂອງຕະຫລາດໃນອານາຄົດຍັງມີສູງ ຊຶ່ງເຫັນໄດ້ ຄື: ສອງບໍລິສັດຂອງລາວ (ບໍລິສັດລາວອາຊຽນມະຫາຊົນຈຳກັດ ແລະ ບໍລິສັດຄຳໄພຊະນະ ກະສິກຳ ຈຳກັດ) ນັບແຕ່ປີ 2009 ເປັນຕົ້ນໄປ ຈະສົ່ງໄມ້ເກດສະໜາອອກໄປຂາຍໃຫ້ ບໍລິສັດໜຶ່ງຂອງ ປະເທດ ບຣູໄນ ຕ່ຳສຸດ ປີລະ 2,000 ໂຕນ ສ້າງລາຍຮັບປີລະ 12 ລ້ານໂລດາ (Business & Enterainment Magazine. 2006)

ສະນັ້ນ, ການປູກໄມ້ເກດສະໜາໃນລະບົບກະສິກຳ ແລະ ປ່າໄມ້ ໂດຍການປູກພືດປະສົມປະສານຫຼາຍຊະນິດ ແມ່ນທາງເລືອກໜຶ່ງທີ່ດີ ເພື່ອເປັນການນຳໃຊ້ທີ່ດິນໃຫ້ມີຄວາມຍືນຍົງ ແລະ ໃຫ້ເກີດຜົນປະໂຫຍດສູງສຸດ. ໃນຫົວຂໍ້ການສຶກສານີ້ ແມ່ນການຊອກຫາຮູບແບບທີ່ດີໃນການປູກໄມ້ເສດຖະກິດປະສົມປະສານ ກັບຊະນິດພັນເຄື່ອງປ່າຂອງດົງ ແລະ ພືດອາຍຸສັ້ນ.

**ຄາດໝາຍຜົນໄດ້ຮັບ**

ໄດ້ຂໍ້ແນະນຳ ເຖິງຮູບແບບການປູກໄມ້ເກດສະໜາ, ເປືອກເມືອກ ແລະ ພືດອາຍຸສັ້ນ ໃນແຕ່ລະໄລຍະທ່າງທີ່ແຕກຕ່າງກັນ (Agroforestry ແລະ Farmforestry). ແລະ ໄດ້ຂໍ້ແນະນຳທາງດ້ານເຕັກນິກ, ຄວາມສ່ຽງ ແລະ ໂອກາດຂອງການປູກພືດດັ່ງກ່າວ.

**ການທົບທວນວຽກງານ**

ບົດລາຍງານ ຄວາມຄືບໜ້າ ເດືອນ 4,5,6 / 2006 ການປູກໄມ້ເກດສະໜາ ກັບໄມ້ໃຫ້ໝາກແບບປະສົມປະສານ ເຫັນວ່າຢູ່ເມືອງໂພນໄຊ, ແຂວງຫລວງພະບາງ ແລະ ເມືອງນາໝໍ້, ແຂວງອຸດົມໄຊ ໄດ້ສະແດງໃຫ້ເຫັນວ່າໄມ້ເກດສະໜາ ແມ່ນມີການຈະເລີນເຕີບໂຕດີ ຊຶ່ງເຫັນໄດ້ວ່າຫຼັງຈາກ ປູກໄດ້ອາຍຸ 2 ປີ ມີລວງສູງ ສະເລັ່ຍ 196,24 cm ແລະ ມີວັດຮອບໜ້າຕ້າງສະເລັ່ຍ 13,71 cm).

ການປູກໄມ້ເກດສະໜາໃນໄລຍະຜ່ານມາ ທີ່ໄດ້ປູກ ໂດຍ ປະຊາຊົນ, ອົງການຈັດຕັ້ງລັດ ແລະ ບໍລິສັດເອກກະຊົນ ເຊັ່ນ: ສວນປູກໄມ້ເກດສະໜາ ແຂວງ ວຽງຈັນ, ວັງວຽງ, ສວນລວມພັນໄມ້ເກດສະໜາທີ່ ສູນຄົ້ນຄ້ວາປ່າໄມ້ ແມ່ນ ມີການຈະເລີນເຕີບໂຕໄດ້ດີ ແລະ ມີທ່າແຮງຈະມີພື້ນທີ່ຂະຫຍາຍຕົວເພີ່ມຂຶ້ນເລື້ອຍໆ ( ຄໍາຕັນ ຄໍາພັນ, 2004 ).

ຂະບວນການປູກໄມ້ເກດສະໜາໃນບັນດາ ແຂວງ ພາກແຂວງພາກເໜືອແມ່ນ ມີທ່າແຮງຈະເພີ່ມຂຶ້ນເລື້ອຍໆ ເປັນຕົ້ນ ແມ່ນ ແຂວງ ຫຼວງນ້ຳທາ ໄດ້ວາງແຜນພັດທະນາເສດຖະກິດ-ສັງຄົມ ໂດຍຈຸດໜຶ່ງໄດ້ເລັ່ງໃສ່ ແມ່ນການຂະຫຍາຍປູກໄມ້ອຸດສະຫະກຳ ຊຶ່ງໃນນັ້ນ ໄມ້ເກດສະໜາ ກໍ່ແມ່ນໄມ້ຊະນິດໜຶ່ງ ທີ່ຈະໄດ້ມີການສົ່ງເສີມປູກ ຈາກເນື້ອທີ່ໆມີໃນປະຈຸບັນ 19 ຮຕ (2006) ຈະໃຫ້ເຖິງ 300 ຮຕ (2010) (ບົດສະຫຼຸບ ການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດສັງຄົມ 2001-2005 ແລະ ທິດທາງແຜນການ 2006-2010 ຂອງ ແຂວງ ຫຼວງນ້ຳທາ, 2006)

**ສະຫລຸບຜົນຮັບ**

<u>ລະບົບ Agroforestry</u>

ຜ່ານການລົງຈັດຕັ້ງປະຕິບັດໂດຍເລີ່ມຈາກ ການສຳພາດຄວາມສົນໃຈຂອງຊາວກະສິກອນ ທັງສອງເມືອງເຫັນວ່າ ມີຊາວກະສິກອນຫລາຍຄອບຄົວທີ່ຢາກເຂົ້າຮ່ວມ ແຕ່ອີງໃສ່ສະພາບຄວາມເໝາະສົມຂອງພື້ນທີ່ຂອງແຕ່ລະຄອບຄົວ ແມ່ນໄດ້ຊາວກະສິກອນທີ່ເຂົ້າຮ່ວມທັງໝົດໃນສອງເມືອງ ແມ່ນ 12 ຄອບຄົວ ຄື: ເມືອງໂພນໄຊ 2 ບ້ານ, 5 ຄອບຄົວ, ມີເນື້ອທີ່ເທົ່າກັບ 4,93 ຮຕ,ໃຊ້ແນວພັນ ເບ້ຍໄມ້ເກດສະໜາ 1760 ເບ້ຍ, ເປືອກເມືອກ 1760 ເບ້ຍ, ໝາກນັດ 17500 ຍອດ, ແກ່ນຖົ່ວແຮ 3 ກິໂລ ແລະ ພືດອາຍຸສັ້ນເປັນຂອງຊາວກະສິກອນເອງ ແລະ ເມືອງນາໝໍ້ 1 ບ້ານ ມີ 7 ຄອບຄົວ ມີເນື້ອທີ່ເທົ່າກັບ 7,15 ຮຕ ໃຊ້ແນວພັນເບ້ຍໄມ້ເກດສະໜາ 2552 ເບ້ຍ,ເປືອກເມືອກ 2552 ເບ້ຍ, ໝາກນັດ 3800 ຍອດ ,ຖົ່ວແຮ 4.2 ກິໂລ ແລະ ແນວພັນພືດອາຍຸສັ້ນເປັນຂອງຊາວກະສິກອນ ແລະ ສ່ວນໜຶ່ງແມ່ນທາງໂຄງການເປັນຜູ້ຕອບສະໜອງໃຫ້.

ໃນການລົງມືຈັດຕັ້ງປະຕິບັດເຫັນວ່າ ຊາວກະສິກອນແຕ່ລະຄອບຄົວໄດ້ເອົາໃຈໃສ່ ແລະ ໃຫ້ຄວາມຮ່ວມມືເປັນຢ່າງດີ ຊຶ່ງມັນສະແດງອອກ ຄື : ປະຊາຊົນໄດ້ໃຫ້ການຮ່ວມມືຢ່າງເຕັມສ່ວນ ແລະ ສົມກັບຄວາມຢາກໄດ້ຢາກເຮັດຂອງເຂົາເຈົ້າແທ້ ຊຶ່ງມັນສະແດງອອກ ຄື: ການຮັບເອົາເບ້ຍໄມ້, ການຂົນສົ່ງເບ້ຍໄມ້ຊຶ່ງບາງບ້ານທີ່ມີເງື່ອນໄຂແມ່ນໄດ້ນຳ ໃຊ້ພາ

ທານະຂອງເຂົາເຈົ້າເອງໃນ ການຂົນສົ່ງເບັ້ຍໄມ້ ແລະ ສາມາດປູກພືດແຕ່ລະຊະນິດໄດ້ທັນລະດູການ.
ພື້ນທີ່ຂອງແຕ່ລະຄອບຄົວຕິດກັນ ຊຶ່ງເຮັດໃຫ້ການຊ່ວຍເຫຼືອ ແຮງງານຊຶ່ງກັນ ແລະ ກັນຂອງ ປະຊາຊົນ ໄດ້ສະດວກຂຶ້ນ.

ເບັ້ຍໄມ້ເກດສະໜາ ແລະ ເປືອກເມືອກ ທີ່ນຳໄປປູກຂ້ອນຂ້າງເປັນເບັຍນ້ອຍ ຮາກບໍ່ທັນແຂງແຮງ ແລະ ຫລັງຈາກປູກແລ້ວຝົນບໍ່ຕົກເປັນເວລາເກືອບ 2 ອາທິດ ເຮັດໃຫ້ແຫ້ງແລ້ງສົ່ງຜົນໃຫ້ປວກກັດຮາກເບັ້ຍໄມ້ທີ່ນຳໄປປູກ ເຮັດໃຫ້ເບັຍເກດສະໜາ ແລະ ເປືອກເມືອກ ຕາຍຫລາຍ ໂດຍສະເພາະແມ່ນ ຢູ່ເມືອງ ໂພນໄຊ ຊຶ່ງພາຍຫລັງປູກ ໄດ້ໜຶ່ງເດືອນແມ່ນເຫັນໄດ້ ດັ່ງນີ້: ເມືອງໂພນໄຊ ເກດສະໜາຕາຍ 26.87%, ເປືອກເມືອກ 25.51%, ເມືອງນາໝໍ້ ເກດສະໜາ ຕາຍ 4.45%, ເປືອກເມືອກຕາຍ 15.09%.

<u>ລະບົບ Farm forestry</u>

ສຳລັບຄອບຄົວຊາວກະສິກອນທີ່ເຂົ້າຮ່ວມການປູກໄມ້ເກດສະໜາ, ເປືອກເມືອກປະສົມປະສານ ທັງໝົດ 9 ຄອບຄົວ ມີເນື້ອທີ່ 6 ເຮັກຕາໃນສອງເມືອງ ຄື:

- ເມືອງ ໂພນໄຊ ມີ 7 ຄອບຄົວ ມີເນື້ອທີ່ 4.3 ເຮັກຕາ ( ບ້ານນ້ຳບໍ່ 3 ຄອບຄົວ, ບ້ານ ປຸງເປົ້າ 4 ຄອບຄົວ)
- ເມືອງ ນາໝໍ້ ມີ 2 ຄອບຄົວ ມີເນື້ອທີ່ 1.8 ເຮັກຕາ ( ບ້ານ ກົກຝາດ 2 ຄອບຄົວ )
- ບາງຄອບຄົວແມ່ນມີຄວາມສົນໃຈຫຼາຍໃນການປູກໄມ້ເກດສະໜາໃນລະບົບນີ້ ແລະ ມີຄວາມເຂົ້າໃຈດີ ກ່ຽວກັບເຕັກນິກໃນການປູກ, ຮູ້ຈັກຄຸນຄ່າຂອງຕົ້ນໄມ້ ຊະນິດຕ່າງໆທີ່ປູກປະສົມປະສານກັນຢ່າງເປັນລະບົບ, ຈະຂະຫຍາຍລະບົບການປູກ ແບບປະສົມປະສານອີກໃນຕໍ່ໜ້າ.

**ສະຖານທີ່**

ການສຶກສາແມ່ນຈັດຕັ້ງປະຕິບັດຢູ່ເມືອງຄື: ເມືອງ ໂພນໄຊ, ບ້ານ ນ້ຳບໍ່ ແລະ ບ້ານປຸ່ງເປົ້າ. ເມືອງນາໝໍ້ ,ບ້ານ ນາໝໍ້ໄຕ້ ແລະ ບ້ານປາງດູ່

**ວິທີການ**

<u>ລະບົບ Agroforestry</u>

ໃນການຄົ້ນຄ້ວາທົດລອງນີ້ ແມ່ນການປູກໄມ້ເກດສະໜາ ແລະ ເປືອກເມືອກ ແບບປະສົມປະສານກັບພືດອາຍຸສັ້ນ ກິດຈະກຳນີ້ແມ່ນຈະຊ່ວຍເຮັດໃຫ້ຊາວກະສິກອນ ມີລາຍຮັບຕະຫລອດປີ ຄື: ປີທີ່ນຶ່ງແມ່ນໄດ້ຈາກພືດອາຍຸສັ້ນ (ເຂົ້າ,ສາລີ...), ປີທີ່ 2 ເຖິງ ປີທີ 4 ແມ່ນຈະໄດ້ຈາກພືດອາຍຸສັ້ນ, ໝາກນັດ ແລະ ເປືອກເມືອກ . ຊ່ວຍຮັກສາຄວາມອຸດົມສົມບູນ ແລະ ປ້ອງການເຊາະເຈື່ອນຂອງດິນອີກດ້ວຍ ໂດຍມີລາຍລະອຽດດັ່ງລຸ່ມນີ້:

ມີ 2 ສິ່ງທົດລອງຄື:

T1= ການປູກແບບປະສົມປະສານເກດສະໜາ, ເປືອກເມືອກ, ໝາກບັດ ແລະ ພືດອາຍຸສັ້ນ

T2= ການປູກແບບປະສົມປະສານເກດສະໜາ, ເປືອກເມືອກ ແລະ ພືດອາຍຸສັ້ນແຕ່ບໍ່ມີ ໝາກ ບັດ

ໃນພາກປະຕິບັດແມ່ນເຮັດຮ່ວມກັນ 10 ຄອບຄົວ. ການອອກແບບທາງດ້ານສະຖິຕິ ແມ່ນ ນຳ ໃຊ້ລະບົບ RCBD.

ຂໍ້ມູນທີ່ຈະຕ້ອງເກັບກຳ ມີຄື:

- ການຈະເລີນເຕີບໂຕຂອງ ເກດສະໜາ, ເປືອກເມືອກ ແລະ ຖົ່ວແຮ.
- ເປີເຊັນການລອດຕາຍ ການຕາຍຂອງ ເກດສະໜາ, ເປືອກເມືອກ, ໝາກບັດ ແລະ ຖົ່ວແຮ.
- ຜົນຜະລິດ ຂອງພືດໄລຍະສັ້ນ ແລະ ໝາກບັດ.
- ຂໍ້ມູນການນຳໃຊ້ແຮງງານ, ແນວພັນ ແລະ ອຸປະກອນ.

<u>ລະບົບ Farm forestry</u>

ການປູກໄມ້ເກດສະໜາ, ເປືອກເມືອກ ແມ່ນເອົາເບ້ຍທີ່ມີອາຍຸເທົ່າກັນ ຫຼື ເບ້ຍທີ່ມີອາຍຸໄດ້ 1 ປີຂຶ້ນໄປ, ໃນການປູກຈະປູກແບບສະຫຼັບຕົ້ນ ເຊັ່ນ: ປູກໄມ້ເກດສະໜາສະຫຼັບກັບຕົ້ນເປືອກເມືອກ ຕາມແຖວຂວາງຂອງຄວາມຄ້ອຍຊັນ ໂດຍໃຊ້ເຕັກນິກໃນການປູກດ້ວຍໄລຍະຫ່າງ 3x4 ແມັດ ແລະ ປູກພືດອາຍຸສັ້ນສັບຫວ່າງແຖວຂອງຕົ້ນໄມ້, ປູກດ້ວຍໄລຍະຫາງ 40x40 cm.

ຂໍ້ມູນທີ່ຈະຕ້ອງເກັບກຳ ລວມມີ: ການຈະເລີນເຕີບໂຕ, ການຕາຍຂອງຕົ້ນໄມ້ເກດສະຫນາ ແລະ ເປືອກເມືອກ, ຜົນຜະລິດຂອງພືດອາຍຸສັ້ນທີ່ປູກປະສົມໃນພື້ນທີ່, ມູນຄ່າຕົ້ນທຶນ, ລາຄາຂາຍ.

**ແຜນກິດຈະກຳສຳລັບ ສົກປີ 2006 - 2007**

ຕ້ອງໄດ້ເກັບຂໍ້ມູນ ການຈະເລີນເຕີບໂຕ ແລະ ການລອດຕາຍ ຂອງເກດສະໜາ, ເປືອກເມືອກ ແລະ ຖົ່ວແຮ ຄັ້ງທີ່ 1 ຫລັງຈາກປູກໄດ້ 6 ເດືອນ ຄື ເດືອນ 12/2006 ແລະ ສຳລັບ ເປືອກເມືອກ ແລະ ຖົ່ວແຮ ເກັບເປັນຄັ້ງທີ່ 2 ໃນເດືອນ 6/2007, ປູກພືດໄລຍະສັ້ນ ໃນພື້ນ ທີ່ລະຫວ່າງຕົ້ນໄມ້ໃນປີທີ່ 2, ຊຶ່ງເປັນຊ່ວງທີ່ບໍ່ທັນມີຮົ່ມຫລາຍຈາກຕົ້ນ ເກດສະໜາ ແລະ ເປືອກເມືອກ, ເກັບກຳຂໍ້ມູນການນຳໃຊ້ ແຮງງານ ແລະ ແນວພັນ ຕ້ອງໄດ້ປູກຕົ້ນໄມ້ ເກດ ສະໜາ, ເປືອກເມືອກ ແລະ ໝາກບັດ ທີ່ຕາຍ ຫລື ສູນຫາຍຄືນໃໝ່.

**ແຜນວຽກ**

| 2006 ຫາ 2007 | ຕຸລາ | ພະຈິກ | ທັນວາ | ມັງກອນ | ກຸມພາ | ມີນາ | ເມສາ | ພຶດສະພາ | ມິຖຸນາ | ກໍລະກົດ | ສິງຫາ | ກັນຍາ | ຜູ້ຮັບຜິດຊອບ |
|---|---|---|---|---|---|---|---|---|---|---|---|---|---|
| **ພາກຫ້ອງການ** | | | | | | | | | | | | | |
| ວາງແຜນ | | x | | | x | | | | | | | | FRC |
| ວິເຄາະຂໍ້ມູນ | | | | x | | | X | | | | | x | FRC |
| ຂຽນບົດລາຍງານ | | | | x | | | | | x | | | | FRC |
| ນຳສະເໜີຜົນ | | | | x | | | | | x | | | | FRC |
| **ວຽກງານພາກສະໜາມ** | | | | | | | | | | | | | |
| ເກັບກຳຂໍ້ມູນ | | x | x | | | | | | x | | | x | FRC;NAFRec & NM |
| ປູກສ້ອມ | | | | | | | | | x | | | | NM |
| ປູກພືດກະສິກຳ | | | | | | | | x | | | | | NM |

**ພະນັກງານເຂົ້າຮ່ວມ** ທ. ວຽງສຸກ ໝັ້ນສຸພົມ ແລະ ນ. ສົມຈັນ ນັນທະວົງ ສູນຄົ້ນຄ້ວາປ່າໄມ້, ວັນເພັງ ບູນຄົງ (NAFReC) ທ. ວິເລີດ, ຫ້ອງການປະສານງານໂຄງການປະຈຳ ເມືອງນາໝໍ້

**ງົບປະມານຄາດຄະເນ** 77,950,000 ກີບ (ໂຄງການ 3 ປີ )

**ສະຖານະພາບ ໃນປະຈຸບັນ** ໃນປະຈຸບັນເຫັນວ່າ ກິດຈຳກຳດັ່ງກ່າວຢູ່ ເມືອງໂພນໄຊ ໄດ້ໂຈະໄປແລ້ວ (ບໍ່ມີການເກັບກຳຂໍ້ມູນ) ເນື່ອງຈາກ ເບ້ຍໄມ້ເກດສະໜາ ແລະ ເປືອກເມືອກ ແມ່ນຕາຍຫລາຍ ຍ້ອນວ່າເບ້ຍ ໄມ້ທີ່ນຳໄປປູກບໍ່ ມີຄຸນນະພາບ ແຕ່ຈະໄດ້ມອບໃຫ້ທາງ ຫ້ອງການສົ່ງເສີມກະສິກຳ ແລະ ປ່າ ໄມ້ເມືອງເປັນຜູ້ປູກທົດ ແທນຄືນໃໝ່ ດ້ວຍພືດຊະນິດເກົ່າ ຫຼື ຊະນິດອື່ນທີ່ມີຄຸນນະພາບ ແລະ ມີລາຍຮັບໃຫ້ແກ່ຄອບຄົວ ໃນອານາຄົດ.

ສຳລັບເມືອງນາໝໍ້ແມ່ນຈະໄດ້ສືບຕໍ່ຕິດຕາມກວດກາ ແລະ ເກັບກຳຂໍ້ມູນຕໍ່ໄປ.

| | |
|---|---|
| **4.4. ຫົວຂໍ້ຄົ້ນຄວ້າ** | **ທົດລອງນຳໃຊ້ຮູບແບບການປູກພືດຄຽງທີ່ປະສົມປະສານລະຫວ່າງ ໄມ້ສັກ, ປໍສາ ແລະ ພືດອາຍຸສັ້ນຢູ່ດິນຄ້ອຍຊັນ** |

**ປະເພດການຄົ້ນຄ້ວາ** ການຄົ້ນຄ້ວາໃນພື້ນທີ່ການຜະລິດຕົວຈິງ ຮ່ວມກັບຊາວກະສິກອນ

**ຈຸດປະສົງ** ປັບປຸງຮູບແບບການປູກພືດປະສົມປະສານໃຫ້ເໝາະສົມພ້ອມດຽວກັນກໍ່ເປັນການອະນຸລັກດິນ,

ສາມາດຕອບສະໜອງລາຍຮັບຕໍ່ພື້ນທີ່ສູງສຸດໃນໄລຍະຍາວ ແລະ ໃຫ້ຊາວກະສິກອນເຂດຈຸດສຸມໄດ້ນໍາໃຊ້ຢ່າງກວ້າງຂວາງ

**ບົດອະທິບາຍ ແລະ ຄວາມກ່ຽວພັນ**

ຊາວກະສິກອນເຂດພູດອຍຍັງຍຶດຖືອາຊີບເຮັດໄຮ່ ເພື່ອເພີ່ມຜົນໄດ້ຮັບຕໍ່ພື້ນທີ່ໃຫ້ຫຼາຍຂື້ນໃນໄລຍະຍາວນັ້ນ ວິທີນີ້ງກໍ່ແມ່ນການປູກແບບປະສົມປະສານລະຫວ່າງຕົ້ນໄມ້ກັບພືດໄລຍະສັ້ນ ແລະ ໄລຍະຍາວ ເຊິ່ງມັນຈະເປັນສ່ວນນຶ່ງເພື່ອຕອບສະໜອງຕໍ່ແຜນງານຢຸດຕິການຖາງປ່າເຮັດໄຮ່ແບບເລື່ອນລອຍຂອງລັດຖະບານ. ຖ້າຫາກວ່າຊາວກະສິກອນບົວລະບັດຮັກສາຕົ້ນໄມ້ໄດ້ດີ ກໍ່ຈະເຮັດໃຫ້ເຂົາເຈົ້າມີຜົນໄດ້ຮັບຕໍ່ພື້ນທີ່ຫຼາຍຂື້ນ ແລະ ມີລາຍຮັບດີໃນອານາຄົດ ເມື່ອທຽບໃສ່ການປູກແຕ່ພືດອາຍຸສັ້ນຢ່າງດຽວ. ເຕັກນິກດັ່ງກ່າວນີ້ຊ່ວຍໃຫ້ຊາວກະສິກອນມີລາຍຮັບ ແລະ ມີອາຫານຢ່າງເປັນປົກກະຕິ ຈາກການເກັບກ່ຽວ ຜົນຜະລິດຂອງພືດສໍາຮອງທີ່ປູກປະສົມປະສານ.

ລະບົບການປູກໄມ້ແບບປະສົມປະສານ ຈະເປັນການເສີມສ້າງຄວາມຫລາກຫລາຍ ທາງດ້ານພືດພັນກະສິກໍາ,ໃນນັ້ນໄມ້ສັກກໍ່ເປັນໄມ້ຊະນິດນຶ່ງທີ່ນໍາມາປູກໃນລະບົບນີ້ ໄມ້ດັ່ງກ່າວເປັນໄມ້ຊະນິດນຶ່ງ ທີ່ທາງລັດຖະບານໄດ້ກໍານົດໃຫ້ມີການສົ່ງເສີມປູກ ເພື່ອຕອບສະໜອງຄວາມຕ້ອງການຂອງ ຕະຫຼາດ ແລະ ການຊົມໃຊ້ ໃນອານາຄົດ ເຊິ່ງເຮັດໃຫ້ມີການປູກຢ່າງກວ້າງຂວາງ ດ້ວຍຮູບແບບການປູກໄມ້ສັກລ້ວນ ແລະ ຮູບແບບການປູກໄມ້ສັກປະສົມປະສານກັບພືດອາຍຸສັ້ນ. ຊຶ່ງຈະຊ່ວຍຫລຸດຜ່ອນ ຄວາມສ່ຽງຈາກການຖືກທໍາລາຍໂດຍ ສັດຕູພືດ ແລະ ມັນຍັງເຮັດໃຫ້ການນໍາໃຊ້ທີ່ດິນເກີດຜົນປະໂຫຍດສູງສຸດ ແລະ ຊ່ວຍຮັກສາຄວາມອຸດົມສົມບູນຂອງດິນໂດຍການປູກພືດຫລາຍຊະນິດປະສົມປະສານກັນ.

ສິນຄ້າທີ່ຕ້ອງການຫຼາຍຊະນິດ ນຶ່ງໃນປະເພດເຄື່ອງປ່າຂອງດົງ ກໍ່ແມ່ນປໍສາ ຍ້ອນມີການປຸງແຕ່ງຜະລິດຕະພັນຈາກປໍສາເພີ່ມຂຶ້ນ ເຮັດໃຫ້ປໍສາທີ່ມີຢູ່ໃນທໍາມະຊາດ ຕອບສະໜອງບໍ່ພຽງພໍກັບຄວາມຕ້ອງການ ສະນັ້ນ ຈຶ່ງມີການສ້າງສວນປູກປໍສາໃນໄຮ່ຊາວກະສິກອນ ເພື່ອແກ້ໄຂບັນຫາດັ່ງກ່າວ ພ້ອມທັງເປັນການປະຢັດເວລາ ແລະ ສະດວກໃນການເກັບກູ້ ຊຶ່ງຈະຊ່ວຍໃຫ້ຊາວກະສິກອນຊົມໃຊ້ປໍສາແບບຍືນຍົງ ແຕ່ໃນໄລຍະລໍຖ້າຜົນຜະລິດຈາກປໍສາ ຄວນປູກພືດອາຍຸສັ້ນປະສົມປະສານຄຽງຄູ່ໄປພ້ອມ. ເພາະສະນັ້ນ ການຄົ້ນຄ້ວາທົດລອງ ໃນຫົວຂໍ້ນີ້ ຈະຊ່ວຍເປັນທາງເລືອກອີກນຶ່ງທາງ ຂອງລະບົບການປູກພືດທີ່ມີລັກສະນະຮັກສາລະບົບນິເວດ ແລະ ມີເສດຖະກິດດີ ໃນໄລຍະຍາວ.

**ຄາດໝາຍຜົນຮັບ**

ການປູກໄມ້ສັກແບບປະສົມປະສານ ເປັນທາງອອກນຶ່ງໃນການສ້າງລາຍຮັບໃຫ້ແກ່ຊາວກະສິກອນ ແລະ ສັງຄົມ ໃນໄລຍະຍາວ.

**ການທົບທວນວຽກງານ**

ຜ່ານການທົບທວນເອກະສານໄດ້ພົບວ່າ ມີຫຼາຍໂຄງການໄດ້ນຳໃຊ້ເຕັກນິກການປູກໄມ້ສັກປະສົມປະສານກັບພືດອາຍຸສັ້ນໃນໄລຍະ 3 ປີ ທຳອິດຢ່າງກວ້າງຂວາງ ແລະ ເປັນທີ່ນິຍົມກັນຫຼາຍ. ຊຶ່ງເຮັດໃຫ້ມີການເພີ່ມຜົນຜະລິດ ແລະ ຍືນນານກ່ວາການປູກໄມ້ສັກຊະນິດດຽວລ້ວນ.

ຜົນການສຶກສາ ຈາກການສຳພາດ ແລະ ສັງເກດຕົວຈິງ ເຫັນວ່າລະບົບການປູກໄມ້ ປະສົມປະສານກັບພືດອາຍຸສັ້ນ ມີຮູບແບບຈຳນວນນຶ່ງໄດ້ເຄີຍຖືກນຳມາທົດລອງຈາກຫຼາຍໂຄງການ ເຊັ່ນ: ການປູກພືດປະສົມປະສານກັບໄມ້ໃຫ້ໝາກຕາມແລວຕ້ານເຈື່ອນ, ການປູກໄມ້ສັກລະບົບຕອງຢາ, ການປູກພືດປັບປຸງປ່າເຫຼົ່າເປັນຕົ້ນ ແຕ່ທັງໝົດນັ້ນບໍ່ໄດ້ຖືກຜັນຂະຫຍາຍ ຢ່າງກວ້າງຂວາງເທື່ອ. ແຕ່ສິ່ງທີ່ໄດ້ເຮັດຜ່ານມາ ແລະ ໄດ້ຮັບຜົນ ແມ່ນການປູກໄມ້ສັກເປັນສວນຂະໜາດໃຫຍ່ ແລະ ຂະໜາດນ້ອຍ ທີ່ມີການປູກພືດອາຍຸສັ້ນໃນໄລຍະທີ່ໄມ້ສັກຍັງນ້ອຍ. ການປູກພືດປະສົມປະສານແມ່ນວິທີການຫຼຸດຜ່ອນການເຊາະເຈື່ອນຂອງດິນທີ່ມີປະສິດທິຜົນສູງ ທັງເປັນການຜະລິດທີ່ສາມາດເພີ່ມລາຍຮັບໃຫ້ແກ່ຊາວກະສິກອນໃນລະດັບທີ່ ແນ່ນອນ ( ຕີ ພົມມະຈັກ ແລະ ຄະນະ ,1999 ).
ເພື່ອເປັນການລຸດຜ່ອນຄວາມສ່ຽງທາງດ້ານລະບົບນິເວດ ແລະ ເສດຖະກິດ.

**ສະຫລຸບຜົນຮັບ**

ຜ່ານການປະເມີນຜົນໃຫ້ຮູ້ວ່າ ຊາວກະສິກອນ ທີ່ເຂົ້າຮ່ວມກິດຈະກຳຍອມຮັບເຕັກນິກການປູກ ແລະ ເປັນທີ່ພໍໃຈຂອງເຂົາເຈົ້າຫຼາຍ ແຕ່ມີ 2 ຄອບຄົວທີ່ປູກໃນແບບສິ່ງເສີມໂດຍບໍ່ມີການເກັບຂໍ້ມູນການຈະເລີນເຕີບໂຕຂອງໄມ້ສັກ ແລະ ປໍສາ ເນື່ອງຈາກເນື້ອທີ່ດິນ ດັ່ງກ່າວ ຫຼຸດຂະໜາດຂອງສວນທົດລອງທີ່ໄດ້ກຳນົດໄວ້. ຊາວກະສິກອນຕ້ອງການພຽງ ແຕ່ປູກໄມ້ສັກຢ່າງດຽວ ແຕ່ວິຊາການກໍ່ໄດ້ໃຫ້ຄຳແນະນຳ ເຖິງຜົນປະໂຫຍດ ແລະ ຄວາມສຳຄັນ ຂອງການປູກແບບປະສົມປະສານຢ່າງລະອຽດ ເຮັດໃຫ້ເຂົາເຈົ້າເຂົ້າໃຈ ແລະ ຈະຕັ້ງໜ້າປະຕິບັດການບົວລະບັດຮັກສາ ແລະ ເບິ່ງແຍງດູແລສວນປູກ ຢ່າງເອົາໃຈໃສ່.

ໃນເວລາສຳຫຼວດເນື້ອທີ່ເບື້ອງຕົ້ນແບບມີສ່ວນຮ່ວມ ຊາວກະສິກອນທີ່ສົນໃຈຢາກເຂົ້າຮ່ວມກິດຈະກຳ ບອກວ່າພື້ນທີ່ຕິດກັນ ແຕ່ໄປເບິ່ງຕົວຈິງ ບາງຄອບຄົວບໍ່ເປັນດັ່ງນັ້ນ ເຊິ່ງມັນເປັນຂໍ້ຈຳກັດຂອງຄອບຄົວທີ່ຈະເຂົ້າຮ່ວມກິດຈະກຳໃນເວລານັ້ນ ສາມາດຄັດເລືອກໄດ້ພຽງ 10 ຄອບຄົວ. ຈຳນວນເບ້ຍໄມ້ສັກ ແລະ ເບ້ຍປໍສາ ທີ່ປູກໃນ 1 ຄອບຄົວແມ່ນບໍ່ມີຈຳນວນເທົ່າກັນ ຂຶ້ນກັບສະພາບພື້ນທີ່ຕົວຈິງ ແລະ ບວກກັບຄວາມຕ້ອງການ ໄມ້ສັກຫຼາຍກ່ວາປໍສາ ແຕ່ວ່າປໍສາທີ່ປູກໃນແຕ່ລະຄອບຄົວແມ່ນພຽງພໍທີ່ຈະເກັບຂໍ້ມູນ.

ການນຳເບ້ຍໄມ້ສັກໄປປູກ ໄດ້ໃຊ້ວິທີການປູກດ້ວຍເບ້ຍ ສຳລັບຄອບຄົວທີ່ຢູ່ໃກ້ ສ່ວນຄອບຄົວທີ່ຢູ່ໄກແມ່ນໃຊ້ວິທີການປູກດ້ວຍເຫງົ້າ ແຕ່ຢູ່ໃນດອນທົດລອງທີ່ຈະເກັບຂໍ້ມູນຂອງແຕ່ລະຄອບຄົວແມ່ນປູກດ້ວຍວິທີດຽວກັນ ວິທີການປູກດ້ວຍເຫງົ້າຊາວກະສິກອນ

ເຂດພູດອຍໂດຍສະເພາະຢູ່ເມືອງໂພນໄຊ ເຄີຍປະຕິບັດຜ່ານມາແມ່ນໄດ້ຮັບຜົນ ແຕ່ມີຂໍ້ຈຳກັດຄື ວິທີການປູກແບບນີ້ຕ້ອງປູກໃນໄລຍະຕົ້ນ ເດືອນພຶດສະພາ ຫາຕົ້ນ ເດືອນມິຖຸນາ ສ່ວນການຂົນເບ້ຍໃສ່ພາສະນະບໍ່ຄວນໃສ່ໜາແໜ້ນເກີນ ໄປເວລາຂົນໄປໃນພື້ນທີ່ປູກ.

ເບ້ຍປໍສາທີ່ນຳໄປປູກ ພາຍຫຼັງປູກໄດ້ 1 ເດືອນ ເປີເຊັນລອດຕາຍ 87.69% . ສ່ວນເບ້ຍໄມ້ສັກ ມີເປີເຊັນລອດຕາຍຂ້ອນຂ້າງສູງ (92.67%)

**ສະຖານທີ່**

ການສຶກສາດັ່ງກ່າວນີ້ ຈະສືບຕໍ່ຈັດຕັ້ງປະຕິບັດຢູ່ ບ້ານ ນ້ຳບໍ່ ແລະ ບ້ານ ທ່າໂພໃຕ້ (ເມືອງໂພນໄຊ) ແຂວງຫຼວງພະບາງ ໃນປີ 2007 ນີ້. ຈາກການປະຕິບັດຜ່ານມາມີເນື້ອທີ່ທັງໝົດ 9.24 ເຮັກຕາ (ບ້ານທ່າໄພໃຕ້ 4.63 ເຮັກຕາຕໍ່ 5 ຄອບຄົວ, ນ້ຳບໍ່ 4.61 ເຮັກຕາຕໍ່ 5 ຄອບຄົວ) ເຊິ່ງລາຍລະອຽດມີໃນບົດສະເໜີການຄົ້ນຄ້ວາ.

**ວິທີການ**

ການສຶກສານີ້ຈະສືບຕໍ່ການທົດລອງ, ດັ່ງນີ້:

ປູກໄມ້ສັກໃຫ້ຄອບຄົວທີ່ເຂົ້າຮ່ວມກິດຈະກຳໃຫ້ເຕັມພື້ນທີ່ ແຕ່ຈະສ້າງດອນມີເນື້ອທີ່ 0.5 ເຮັກຕາ (ປູກໄມ້ສັກກັບປໍສາປະສົມປະສານພືດອາຍຸສັ້ນ) ຕໍ່ 1 ຄອບຄົວ

ໃນພາກປະຕິບັດແມ່ນເຮັດຮ່ວມກັບ 10 ຄອບຄົວໃນ 2 ບ້ານ. ການອອກແບບທາງດ້ານສະຖິຕິແມ່ນ ນຳໃຊ້ລະບົບແບບສຸ່ມຕົວຢ່າງ (systematic) 30% ຂອງແຕ່ລະດອນເຊິ່ງໃນ1 ຄອບຄົວ ມີ 2 ດອນໃຫຍ່ ຂະໜາດຂອງດອນ 0.25 ເຮັກຕາ ໄລຍະຫ່າງຂອງການ ປູກແມ່ນ 3 ແມັດ x 3 ແມັດ ທັງ 2 ດອນແມ່ນມີໄລຍະຫ່າງປູກໄມ້ ເທົ່າກັນ :
ໃນດອນທີ່ປູກໄມ້ສັກລ້ວນ ແລະ ພືດອາຍຸສັ້ນ ໄລຍະຫ່າງປູກໄມ້ສັກກັບໄມ້ສັກ = 3 ມ .
ໃນດອນທີ່ປູກໄມ້ສັກກັບປໍສາ ແລະ ພືດອາຍຸສັ້ນໄລຍະຫ່າງປູກໄມ້ສັກກັບປໍສາ = 3 ມ.
ຊຶ່ງໄລຍະຫ່າງລະຫວ່າງໄມ້ສັກກັບ ໄມ້ສັກ 6 ແມັດ, ປໍສາກັບ ປໍສາ 6 ແມັດ.

ຂໍ້ມູນທີ່ຈະຕ້ອງເກັບກຳ ລວມມີ:
ການຈະເລີນເຕີບໂຕ, ການຕາຍຂອງຕົ້ນໄມ້ສັກ ແລະ ຕົ້ນປໍສາ; ຜົນຜະລິດ ຂອງພືດໄລຍະສັ້ນ (ໝາກງາ, ໝາກເດືອຍ, ຖົ່ວເຫຼືອງ) ທີ່ປູກປະສົມ; ມູນຄ່າຕົ້ນທຶນ; ລາຄາຂາຍ; ການປະເມີນເຕັກໂນໂລຢີໂດຍ ຊາວກະສິກອນເອງ ; ສະພາບຄວາມອຸດົມ ສົມບູນຂອງດິນ.

**ແຜນກິດຈະກຳສຳລັບ ສົກປີ 2006 - 2007**

ການທົດລອງນີ້ຈະໄດ້ສືບຕໍ່ເກັບກຳຂໍ້ມູນຕ່າງໆແມ່ນທາງສູນຄົ້ນຄ້ວາປ່າໄມ້ ຕ້ອງໄດ້ສືບຕໍ່ເກັບກຳຂໍ້ມູນການຈະເລີນເຕີບໂຕ ແລະ ການຫລອດຕາຍ ຂອງຕົ້ນໄມ້. ຄວນປູກຖົ່ວເຫລືອງ ໃນພື້ນທີ່ລະຫວ່າງຕົ້ນໄມ້ ໃນປີທີ່ 2, ຊຶ່ງເປັນຊ່ວງທີ່ຍັງບໍ່ທັນມີຮົ່ມຫລາຍຈາກໄມ້ສັກ ແລະ ປໍສາ. ຕ້ອງໄດ້ປູກຕົ້ນໄມ້ ທີ່ຕາຍ ຫລື ສູນຫາຍ ຄືນໃຫມ່.

ຈະຕ້ອງໄດ້ສະເຫນີຂໍ້ມູນທາງດ້ານເສດຖະກິດ ໃນມູນຄ່າການລົງທຶນເບື້ອງຕົ້ນ ແລະ ການໄລ່ລຽງກ່ຽວກັບຕົ້ນທຶນ ແລະ ກຳໄລ. (ເຮັດຮ່ວມກັບ ໂຄງການຍ່ອຍຄົ້ນຄ້ວາເສດຖະກິດ-ສັງຄົມ).

ດຳເນີນການເກັບ ແລະ ວິໃຈຕົວຢ່າງດິນ ເພື່ອຂຽນລາຍງານກ່ຽວກັບຂະບວນການປັບປຸງຄວາມອຸດົມສົມບູນຂອງດິນ.

**ແຜນວຽກ**

ແຜນປະຕິບັດວຽກງານທັງພາກຫ້ອງການ ແລະ ພາກສະໜາມມີດັ່ງນີ້:

| ປີ 2006 ຫາ 2007 | ຕຸລາ | ພະຈິກ | ທັນວາ | ມັງກອນ | ກຸມພາ | ມີນາ | ເມສາ | ພຶດສະພາ | ມິຖຸນາ | ກໍລະກົດ | ສິງຫາ | ກັນຍາ | ຜູ້ຮັບຜິດຊອບ |
|---|---|---|---|---|---|---|---|---|---|---|---|---|---|
| ● ວຽກຫ້ອງການ | | | | | | | | | | | | | |
| ປ້ອນຂໍ້ມູນ | | | | X | | | | | | | | | FRC |
| ກວດກາແລະສັງລວມຂໍ້ມູນຕ່າງໆທີ່ຈຳເປັນ | | | | X | | | | | X | | | | FRC |
| ຂຽນລາຍງານຄວາມຄືບໜ້າ | | | | | X | | | | | X | | | FRC |
| ● ວຽກພາກສະໜາມ | | | | | | | | | | | | | |
| ເກັບຂໍ້ມູນຜົນຜະລິດພືດອາຍຸສັ້ນ | X | | | | | | | | | | | | PX |
| ເກັບຂໍ້ມູນການຈະເລີນເຕີບໂຕຂອງໄມ້ສັກ | | | X | | | | | | | | | | FRC,NAFReC, PX |
| ກະກຽມເບ້ຍສັກທີ່ຈະປູກເພື່ອຂະຫຍາຍພື້ນທີ່ຫຼືປູກແທນຄືນຕົ້ນທີ່ຕາຍ | | | | X | X | X | X | | | | | | NAFReC, PX |
| ຕິດຕາມການປູກພືດອາຍຸສັ້ນ,ປູກແທນຄືນຕົ້ນໄມ້ທີ່ຕາຍ | | | | | | | X | | | | | | NAFReC, PX |
| ກະກຽມພື້ນທີ່ (ອານາໄມ,ຖາກ/ຖາງ) | | | | | | X | | | | | | | PX |

**ພະນັກງານເຂົ້າຮ່ວມ** ບຸນປະສັກໄຊ ຄຳພູມີ (FRC), ນາງ ນິດຄຳ ຈັນທະວົງ (NAFReC), ສົມພອນ ແກ້ວປະເສີດ (ຫ້ອງການສົ່ງເສີມ ກະສິກຳ ແລະ ປ່າໄມ້ ເມືອງ ໂພນໄຊ),

**ງົບປະມານຄາດຄະເນ :** 93.700.000 ກີບ( ງົບປະມານ 5 ປີ )

**ສະຖານະພາບ ໃນປະຈຸບັນ** ໃນປະຈຸບັນນີ້ ເຫັນວ່າ ກິດຈະກຳດັ່ງກ່າວ ແມ່ນຈະໄດ້ສືບຕໍ່ເກັບຂໍ້ມູນການຈະເລີນເຕີບ ຂອງໄມ້ສັກ ແລະ ຕົ້ນປໍສາທີ່ຍັງເຫຼືອ ແລະ ສັງລວມຂໍ້ມູນຜົນຜະລິດພືດອາຍຸສັ້ນ ປະຈຳປີ 2005 - 2006, ຂໍ້ມູນເສດຖະກິດສັງຄົມຂອງຄອບຄົວທີ່ເຂົ້າຮ່ວມກິດຈະກຳ. ປຶກສາຫາລືກັບ ພະນັກງານຜູ້ຮັບຜິດຊອບ ຈາກສູນຄົ້ນຄ້ວາກະສິກຳ ແລະ ປ່າໄມ້ພາກເໜືອ, ພະນັກງານປະສານງານເມືອງ ກ່ຽວກັບ ການກະກຽມເບ້ຍໄມ້ທີ່ຈະປູກແທນຄືນ ຕົ້ນທີ່ຕາຍ ແລະ ຂະຫຍາຍເນື້ອທີ່ປູກພາຍໃນຄອບຄົວ ຫຼື ຄອບຄົວອື່ນ.

| | |
|---|---|
| 4.5. ຫົວຂໍ້ຄົ້ນຄ້ວາ | **ການປູກເປືອກເມືອກໃນພື້ນທີ່ປ່າເລົ່າ** |

**ຈຸດປະສົງ** ເພື່ອເພີ່ມຜົນຜະລິດເປືອກເມືອກໃຫ້ຫຼາຍຂຶ້ນ ໂດຍບໍ່ມີຜົນກະທົບຕໍ່ປະລິມານເປືອກເມືອກໃນທຳມະຊາດ, ເພື່ອອະນຸລັກໄມ້ເປືອກເມືອກໃຫ້ມີຄວາມຍືນຍົງ ສາມາດຕອບສະໜອງໄດ້ ຕາມຕະຫຼາດຕ້ອງການ ແລະ ເປັນສວນສາທິດແກ່ປະຊາຊົນຜູ້ທີ່ມີຄວາມສົນໃຈ ຢາກປູກເປືອກເມືອກ.

**ບົດອະທິບາຍ ແລະ ຄວາມກ່ຽວພັນ** ພາກເໜືອ ແມ່ນເຂດໜຶ່ງ ທີ່ມີພື້ນທີ່ການຜະລິດກະສິກຳຢ່າງຈຳກັດ, ເຊິ່ງນອກຈາກຊາວກະສິກອນຈະອາໃສການຖາງປ່າ ເພື່ອປູກພືດກະສິກຳແລ້ວ, ການຊອກຫາເຄື່ອງປ່າຂອງດົງມາຂາຍເປັນສິນຄ້າ ກໍ່ແມ່ນສ່ວນທາງໜຶ່ງ ທີ່ສ້າງລາຍຮັບແກ່ປະຊາຊົນໃນຊົນນະບົດໂດຍກົງ.

ປະຈຸບັນ ປະລິມານເຄື່ອງປ່າຂອງດົງໄດ້ຫຼຸດລົງ ໂດຍສະເພາະ ແມ່ນຊະນິດພັນທີ່ເປັນ ສິນຄ້າ ເນື່ອງຈາກ ຄວາມຕ້ອງການຂອງຕະຫຼາດແມ່ນໄດ້ເພີ່ມຂຶ້ນເລື້ອຍໆ ແລະ ການຂະຫຍາຍຕົວຢ່າງວ່ອງໄວຂອງຈຳນວນປະຊາກອນ ອັນເຊິ່ງເຮັດໃຫ້ມີຄວາມຕ້ອງການ ທາງດ້ານສະບຽງອາຫານເພີ່ມຂຶ້ນ.

ໃນປີ 1999 - 2000 ແຂວງ ຫຼວງນ້ຳທາ ກໍແມ່ນແຂວງໜຶ່ງທີ່ສົ່ງອອກ ເປືອກເມືອກຫຼາຍ ເຖິງ 282 ໂຕນ ລອງລົງມາແມ່ນແຂວງບໍ່ແກ້ວ ແລະ ແຂວງຫົວພັນ ຄື 86 ແລະ 15 ໂຕນ ຕາມລຳດັບ ໃນລາຄາ 1.500 - 2.500 ກີບ/ ກິໂລແຫ້ງ . ປີ 2000 ສະເພາະແຂວງ ອຸດົມໄຊ ສົ່ງອອກເປືອກເມືອກ ຂາຍໃຫ້ຈີນໃນຈຳນວນ 680 ໂຕນ ໃນລາຄາ 2.500- 3.000 ກີບ / ກິໂລແຫ້ງ

ເປືອກເມືອກ ກໍ່ແມ່ນໜຶ່ງໃນຊະນິດພັນເຄື່ອງປ່າຂອງດົງ ທີ່ເປັນສິນຄ້າ ແລະ ໄດ້ຮັບການຂຸດຄົ້ນໃນແຕ່ລະປີ, ແຕ່ການຂຸດຄົ້ນນັ້ນ ແມ່ນການຂຸດຄົ້ນແບບດັບສູນ ເຊິ່ງເຮັດໃຫ້ປະລິມານ ຂອງມັນໄດ້ຫຼຸດລົງເທື່ອລະນ້ອຍ. ສະນັ້ນ, ການນຳເອົາເປືອກເມືອກ ອອກມາປູກເປັນສວນ ເພື່ອເກັບກ່ຽວຜົນຜະລິດໃນອະນາຄົດ ແມ່ນ ທາງເລືອກໜຶ່ງທີ່ດີ ເພື່ອຮັບປະກັນຄວາມຍືນຍົງ ຂອງປະລິມານເປືອກເມືອກທີ່ມີຢູ່ໃນທຳມະຊາດ.

ໃນໄລຍະຜ່ານມາ ການນຳເອົາເປືອກເມືອກອອກມາປູກນັ້ນ ແມ່ນຍັງບໍ່ທັນປະກົດໃຫ້ເຫັນເປັນຂະບວນການໃຫຍ່, ໃນຫົວຂໍ້ ການສຶກສານີ້ແມ່ນ ເລັ່ງໃສ່ການຊອກຫາຮູບແບບການປູກເປືອກເມືອກທີ່ເໝາະສົມ ໂດຍສາມາດຈະເລີນເຕີບໄດ້ດີ.

**ຄາດໝາຍຜົນໄດ້ຮັບ**

ໄດ້ຂໍ້ແນະນຳໃນການປູກເປືອກເມືອກໃນພື້ນທີ່ປ່າເລົ່າ ແກ່ປະຊາຊົນຜູ້ທີ່ມີຄວາມສົນໃຈ ແລະ ເປັນຜົນການສຶກສາຂັ້ນພື້ນຖານໃຫ້ແກ່ການຄົ້ນຄ້ວາໃນອະນາຄົດ. ເປັນທາງເລືອກທີ່ດີ ທີ່ສາມາດຊ່ວຍໃນການວາງແຜນນຳໃຊ້ທີ່ດິນປ່າໄມ້ໃຫ້ເກີດຜົນປະໂຫຍດສູງສຸດຈາກການປູກບາງຊະນິດພັນເຄື່ອງປ່າຂອງດົງ.

**ການທົບທວນວຽກງານ**

ເປືອກເມືອກ ໄດ້ມີການກະຈາຍພັນຢູ່ໃນຫຼາຍ ປະເທດໃນອາຊີຕາເວັນອອກສ່ຽງໃຕ້. ປະເທດລາວແມ່ນພົບ ເຫັນຢູ່ໃນເຂດພາກເໜືອ ເກີດຢູ່ໃນລະດັບຄວາມສູງຈາກລະ ດັບໜ້ານ້ຳທະເລ 400-800 m. ມັກເກີດຢູ່ໃນພື້ນທີ່ແຄມ ນ້ຳ, ດິນມີຄວາມອຸດົມສົມບູນ ຕາມເນີນພູຂອງປ່າດົງດິບທີ່ ມີຄວາມຊຸ່ມຊື່ນສູງ. ເປືອກເມືອກນຳໃຊ້ເປັນຢາສະໝຸນໄພ ຮັກສາພະຍາດ, ເຮັດກາວ, ທູບໄລ່ຍຸງ. ເປືອກເມືອກເປັນສິນຄ້າສົ່ງອອກຂາຍປະເທດຈີນ (ວິຈິດ ລຳໄຊ, 2005)

ການທົດລອງການປູກເປືອກເມືອກ ໂດຍໂຄງການ GAA (German Agro Action) ໃນປີ 2005 ທີ່ບ້ານ ເປົ້າໝາຍທີ່ເມືອງ ນາໝໍ້ ໄດ້ມີຜົນການສຶກສາເບື້ອງຕົ້ນວ່າ ຕົ້ນເປືອກເມືອກ ແມ່ນສາມາດຈະເລີນເຕີບໄດ້ດີ ໃນບໍລິເວນແຄມຫ້ວຍນ້ຳ ແລະ ບ່ອນທີ່ມີຄວາມຊຸ່ມຊື່ນສູງ ນອກຈາກນັ້ນ ພື້ນທີ່ປູກຕ້ອງເປີດແສງປະມານ 70% ແຕ່ຖ້າຫາກປູກໃນພື້ນທີ່ເປັນແປນ ຕົ້ນເປືອກເມືອກ ມີການຈະເລີນເຕີບໂຕຊ້າ ແລະ ມີເປີເຊັນການຕາຍສູງ.

**ສະຫລຸບຜົນຮັບ**

ຜ່ານການຈັດຕັ້ງປະຕິບັດຜ່ານມາໄດ້ມີຊາວກະສິກອນເຂົ້າຮ່ວມທັງໝົດຄື: ເມືອງໂພນໄຊ 2 ບ້ານ (ຫ້ວຍມັນ ແລະ ນ້ຳບໍ່ ມີ 7 ຄອບຄົວ, ມີເນື້ອທີ່ ເທົ່າກັບ 2,4 ຮຕ ແລະ ໃຊ້ແນວພັນເບ້ຍເປືອກເມືອກ 2266 ເບ້ຍ, ເມືອງນາໝໍ້ ມີ 21 ຄອບຄົວ, ມີ 3 ບ້ານ (ນາໝໍ້ເໜືອ, ນາໝໍ້ໃຕ້ ແລະ ກົກຝາດ) ມີເນື້ອທີ່ເທົ່າກັບ 2,99 ຮຕ ແລະ ໃຊ້ແນວພັນ ທັງໝົດເປືອກເມືອກ 3322 ເບ້ຍ ແລະ ຫລັງຈາກປູກໄດ້ 2 ເດືອນແມ່ນໄດ້ມີການລົງສຳຫລວດເປີເຊັນການລອດຕາຍ ແລະ ສຳຫລວດການຈະເລີນເຕີບໂຕຊຶ່ງຜ່ານການລົງສຳຫລວດຕົວຈິງແລ້ວ ແມ່ນໄດ້ຂໍ້ມູນດັ່ງນີ້:

- ຄວາມສູງຂອງເປືອກເມືອກໂດຍສະເລັ່ຍເທົ່າກັບ 1,50 m
- ໜ້າຕ້າງຄໍຮາກ 2 ຊັງຕີແມັດ.

ການປູກເປືອກເມືອກໃສ່ໃນພື້ນທີ່ປ່າແປນ ແລະ ເຂດເທິງຈອມພູສູງແມ່ນມີຄວາມສ່ຽງຕໍ່ກັບຄວາມເສຍຫາຍຫຼາຍ

ເປືອກເມືອກຕາຍຫລາຍເນື່ອງຈາກ ພື້ນທີ່ດິນແຂງກະດ້າງ, ຄຸນນະພາບຂອງເບ້ຍໄມ້ບໍ່ໄດ້ມາດຕະຖານ, ເບ້ຍໄມ້ບໍ່ແຂງແຮງ, ຫຼັງຈາກປູກແລ້ວຝົນບໍ່ຕົກໃສ່, ການຂົນສົ່ງກໍ່ໄກຈາກພື້ນທີ່.

**ສະຖານທີ່** ເມືອງໂພນໄຊ, ບ້ານ ນ້ຳບໍ່ ແລະ ຫ້ວຍມັນ ເມືອງນາໝໍ້ ບ້ານ ນາໝໍ້ເໜືອ, ນາໝໍ້ໄຕ້ ແລະ ປາງທອງ.

**ວິທີການ** ການຄົ້ນຄ້ວານີ້ແມ່ນການປູກ ດ້ວຍຮູບການປູກກ້ອງປ່າດ້ວຍວິທີ່ດຽວ ແລະ ປູກເປືອກເມືອກ ຊະນິດດຽວ ດ້ວຍໄລຍະຫ່າງ 2x2 ແມັດ, ຕາມພື້ນທີ່ປ່າເຫຼົ່າຂອງແຕ່ລະຄອບຄົວ

ເກັບກຳເປີເຊັນການລອດຕາຍແບບ 100 %

ການເກັບກຳຂໍ້ມູນການຈະເລີນເຕີບໂຕລວງສູງ ແລະ ໜ້າຕ້າງຄໍຮາກ ແມ່ນກຳນົດເປັນດອນ ທີ່ມີຂະໜາດ 36 x 36 m, ກວມເອົາຈຳນວນເບ້ຍ 324 ເບ້ຍ/ 1 ຄອບຄົວ.

ເກັບກຳຂໍ້ມູນທາງດ້ານຜົນຜະລິດ ໂດຍເກັບໝົດທີ່ປະຊາຊົນເກັບກູ້ໄດ້ໃນແຕ່ລະປີຂອງແຕ່ ລະຄອບຄົວ ດ້ວຍການຊັ່ງນ້ຳໜັກ.

**ແຜນກິດຈະກຳ**

**ສຳລັບສົກປີ 2006 - 2007** ແຜນປະຕິບັດວຽກງານທັງພາກຫ້ອງການ ແລະ ພາກສະໜາມມີດັ່ງນີ້:

ແຜນວຽກ

| 2006 ຫາ 2007 | ຕຸລາ | ພະຈິກ | ທັນວາ | ມັງກອນ | ກຸມພາ | ມີນາ | ເມສາ | ພຶດສະພາ | ມິຖຸນາ | ກໍລະກົດ | ສິງຫາ | ກັນຍາ | ຜູ້ຮັບຜິດຊອບ |
|---|---|---|---|---|---|---|---|---|---|---|---|---|---|
| **ພາກຫ້ອງການ** | | | | | | | | | | | | | |
| ສ້າງແຜນ | | x | | | | | | x | | | | | FRC |
| ວິເຄາະຂໍ້ມູນ | | | | x | | | | | | x | | x | FRC |
| ຂຽນບົດລາຍງານ | | | | x | | | | | x | x | | | FRC |
| ນຳສະເໜີຜົນ | | | | x | | | | | x | x | | | FRC |
| **ວຽກງານພາກສະໜາມ** | | | | | | | | | | | | | |
| ເກັບກຳຂໍ້ມູນ | | x | | | | | | | x | | | | FRC,NAFRec,NM |
| ປູກສ້ອມ | | | | | | | | | x | | | | NM |

**ພະນັກງານເຂົ້າຮ່ວມ** ທ. ສຸນີ ພົມດວງສີ ພະນັກງານສູນຄົ້ນຄ້ວາປ່າໄມ້, ໄຊຍະສິດ ພະນັກງານສູນຄົ້ນຄ້ວາພາກ ເໜືອ, ຄຳຫຼ້າ ທິບພະທີງ ພະນັກງານຫ້ອງການປະສານງານໂຄງການ ປະຈຳ ເມືອງນາໝໍ້ ແລະ ຈັນໄຕ ວົງພະຈັນ ພະນັກງານຫ້ອງການປະສານງານໂຄງການ ປະຈຳ ເມືອງ ໂພນໄຊ

**ງົບປະມານຄາດຄະເນ** 40,000,000 ກີບ ( ງົບປະມານ 3 ປີ )

**ສະຖານະພາບ**
**ໃນປະຈຸບັນ** ໃນປະຈຸບັນເຫັນວ່າກິດຈຳກຳດັ່ງກ່າວຢູ່ ເມືອງໂພນໄຊ ໄດ້ໂຈະໄປແລ້ວ (ບໍ່ມີການເກັບກຳຂໍ້ມູນ) ເນື່ອງຈາກເປືອກເມືອກຕາຍຫລາຍ ຍ້ອນວ່າເບ້ຍທີ່ນຳໄປປູກບໍ່ມີຄຸນນະພາບ, ແຕ່ຈະໄດ້ມອບໃຫ້ທາງຫ້ອງການສິ່ງເສີມກະສິກຳ ແລະ ປ່າໄມ້ ເມືອງເປັນຜູ້ ຄົ້ນຄ້ວາ ແລະ ລົງຕິດຕາມໃນການ ປູກທົດແທນຄືນໃໝ່ ດ້ວຍພືດຊະນິດເກົ່າ ຫລືຊະນິດອື່ນທີ່ມີ ຄຸນນະພາບ ແລະ ສາມາດສ້າງລາຍຮັບໃນອະນາຄົດ.

ສຳລັບ ເມືອງນາໝໍ້ ແມ່ນຈະໄດ້ສືບຕໍ່ຕິດຕາມກວດກາ ແລະ ເກັບກຳຂໍ້ມູນຕໍ່ໄປ.

## 4.6. ຫົວຂໍ້ຄົ້ນຄ້ວາ ການປູກໝາກແໜ່ງໃນພື້ນທີ່ປ່າເລົ່າ

**ຈຸດປະສົງ** ເພື່ອເຮັດໃຫ້ປະຊາຊົນມີລາຍໄດ້ເສີມຈາກການເກັບກູ້ໝາກແໜ່ງຈາກສວນປູກມາຂາຍ ເພື່ອຊຸກຍູ້ວຽກການຜະລິດໃຫ້ສູງຂື້ນກາຍເປັນສິນຄ້າໂດຍຫັນຈາກເຮັດແຕ່ໄຮ່ເຂົ້າມາສູ່ການປູກເຄື່ອງປ່າຂອງດົງຕາມປ່າທຳມະຊາດ ຫຼື ແຄມບ້ານ.

- ສ້າງເປັນສວນສາທິດ ໃຫ້ແກ່ປະຊາຊົນທີ່ບໍ່ໄດ້ເຂົ້າຮ່ວມໂຄງການ ແລະ ປະຊາຊົນອ້ອມຂ້າງໄດ້ເຫັນ.
- ໃຫ້ປະຊາຊົນມີອາຊີບເສີມ ມີວຽກເຮັດງານທຳທີ່ຕໍ່ເນື່ອງກັບການຜະລິດກະສິກຳອື່ນໆ ເປັນຕົ້ນ ແມ່ນການປູກເຂົ້າໄຮ່.

**ບົດອະທິບາຍ**
**ແລະ ຄວາມກ່ຽວພັນ** ມີຜະລິດຕະພັນເຄື່ອງປ່າຂອງດົງ ເກືອບທຸກຊະນິດ ຖືກນຳໃຊ້ ໂດຍປະຊາຊົນ, ທັງເປັນອາຫານ ແລະ ເປັນສິນຄ້າ. ຕາມການປະເມີນ ໃນແຕ່ລະເຂດ ແລະ ແຕ່ລະທ້ອງຖິ່ນແມ່ນນຳໃຊ້ແຕກຕ່າງກັນຕາມແຕ່ລະຊະນິດພັນເຄື່ອງປ່າຂອງດົງທີ່ກະຈາຍຢູ່ທົ່ວປະເທດ. ການຈັດສັນປ່າທຳມະຊາດຍັງບໍ່ພຽງພໍໃນການນຳໃຊ້ ແລະ ການຂຸດຄົ້ນແບບດັບສູນຂອງປະຊາຊົນບາງທ້ອງຖິ່ນ.

ການທົດລອງປູກບາງຊະນິດຂອງເຄື່ອງປ່າຂອງດົງ ແມ່ນເພື່ອເປັນການບູລະຮັກສາແນວພັນ ແລະ ໃຫ້ໄດ້ຮັບຜົນຜະລິດທີ່ດີມີຄຸນນະພາບ ແລະ ປະລິມານຫຼາຍ ເພື່ອຮັກສາປ່າທຳມະຊາດໃຫ້ຍືນຍົງຕະຫຼອດໄປ.

ໝາກແໜ່ງ (Amomum) ແມ່ນຜະລິດຕະພັນໜຶ່ງທີ່ເປັນທ່າແຮງອັນສຳຄັນ ທາງດ້ານເສດຖະກິດໃນການສົ່ງອອກ ເພື່ອນຳໃຊ້ເປັນຢາສະໝຸນໄພ ແລະ ເຄື່ອງເທດສຳລັບປຸງແຕ່ງອາຫານຕ່າງໆ.

ໃນປະຈຸບັນການເພີ່ມຂື້ນຂອງ ພົນລະເມືອງໃນອັດຕາ 2,4%/ປີ ອາດເປັນສິ່ງກົດດັນທີ່ນຳໄປສູ່ກົນໄກເສດຖະກິດການຕະຫຼາດ ທີ່ມີການພັດທະນາທາງດ້ານກະສິກຳ ແລະ ອຸດສະຫະກຳ. ຍ້ອນເຫດຜົນນີ້ຍິ່ງເຮັດໃຫ້ຄົນເຮົາມີຄວາມຕ້ອງການ ຂະຫຍາຍຕະຫຼາດເຄື່ອງປ່າຂອງດົງໃຫ້ຫຼາຍຂຶ້ນ ໂດຍສະເພາະໝາກແໜ່ງ. ເພື່ອເພີ່ມຜົນຜະລິດ ແລະ ຕອບສະໜອງໃຫ້ພຽງພໍກັບຄວາມຕ້ອງການນັ້ນ. ການນຳເອົາໝາກແໜ່ງອອກມາປູກເພື່ອເປັນສິນຄ້າ ແມ່ນທາງເລືອກໜຶ່ງທີ່ດີໃນການຊອກຫາຊ່ອງທາງທີ່ເໝາະສົມ ໃຫ້ແກ່ປະຊາຊົນຜູ້ທີ່ມີຄວາມສົນໃຈປູກໝາກແໜ່ງເປັນພື້ນທີ່ຂະໜາດກວ້າງ.

**ຄາດໝາຍຜົນໄດ້ຮັບ**

ໝາກຜົນຂອງການຄົ້ນຄ້ວາທົດລອງນີ້ ແມ່ນມີຂໍ້ມູນຕ່າງໆ ສາມາດແນະນຳຜົນ ທົດລອງດ້ານວິຊາການທີ່ດີໃຫ້ແກ່ພະນັກງານທ້ອງຖິ່ນ ແລະ ຊາວບ້ານ ໂດຍການ ຜະລິດເປັນປຶ້ມຄູ່ມື ສຳລັບເຕັກນິກການປູກ ທີ່ລວມເຖິງວິທີການຈັດການສວນປູກຕ່າງໆ. ຫຼຸດຜ່ອນການນຳໃຊ້ ຫຼື ຂຸດຄົ້ນ ໝາກແໜ່ງໃນທຳມະຊາດ ໂດຍເປີດໂອກາດໃຫ້ຈຳນວນປະຊາກອນຂອງໝາກແໜ່ງ ໄດ້ມີການຂະຫຍາຍຕົວຢ່າງຕໍ່ເນື່ອງ ແລະ ຮັບປະກັນຄວາມຍືນຍົງ.

**ການທົບທວນວຽກງານ**

ໝາກແໜ່ງກວາງຕຸ້ງ (Amomum) ຢູ່ໃນຕະກຸນ Zingiberaceae ຊຶ່ງມີຖິ່ນກຳເນີດຢູ່ໃນເອເຊຍເຂດຮ້ອນ ເຕີບໂຕໄດ້ດີໃນປ່າຊື້ນປຽກ ປ່າດົງ ປ່າໂລ່ງແຈ້ງ ດິນຜຸຜຸ່ຍ ດິນປົນຊາຍ. ເປັນພືດລົ້ມລຸກລຳຕົ້ນສູງປະມານ 100-200 Cm, ໃບດ່ຽວ ມີຂະໜາດໃຫ່ຍ ເສັ້ນກ່າງໃບຂະໜານ ກົກກ້ານໃບເປັນກາບ, ໃບຮູບວີ ເສັ້ນກ່າງໃບ ເຫັນຊັດເຈນທາງດ້ານຫຼັງ, ຫຼັງໃບສີເຂັ້ມ, ດອກ ເປັນຊໍ່ຊ້ອນດອກ ອອກບໍລິເວນຮາກ ມີຂະໜາດ 0.7-1.5 ຊມ. ໝາກແກ່ໃນຊ່ວງເດືອນ 7-8 ຂອງປີ. ໝາກແໜ່ງຕາມທຳມະຊາດ ມີຊະນິດທີ່ເປັນລາຄາມີຫຼາຍຊະນິດ ແຕ່ໝາກແໜ່ງກວາງຕຸ້ງ ເປັນຊະນິດ ທີ່ເກີດໄດ້ດີໃນປ່າໂຄກ ແລະ ສາມາດເກັບກູ້ໄວ.

ການກະຈາຍພັນຂອງໝາກແໜ່ງມີແຕ່ເໜືອເຖິງໃຕ້ ນອກນີ້ຍັງມີຢູ່ໃນປະເທດໃກ້ຄຽງອີກ ຫຼຽວດນາມ, ໄທ, ຈີນ ເກີດປົນກັບປ່າໄມ້ຢູ່ກ້ອງຮົ່ມໄມ້ແມ່ນເກີດໄດ້ດີ ເຊັ່ນ: (ວິຈິດ ລຳໄຊ, 2005)

ໂຄງການ GAA (German Agro Action) ໄດ້ມີການທົດລອງປູກໝາກແໜ່ງຢູ່ ທີ່ບ້ານ ນາເຕົ່າໃໝ່ ເມືອງ ນາໝໍ້ ແຂວງ ອຸດົມໄຊ ຊຶ່ງໄດ້ມີຜົນການສຶກສາວ່າ ຕົ້ນໝາກແໜ່ງ ແມ່ນສາມາດປູກໄດ້, ມີການຈະເລີນເຕີບໂຕດີ ແລະ ໄດ້ຜົນຜະລິດສູງພໍສົມຄວນ ມາຮອດປະຈຸບັນ ຄອບຄົວທີ່ປູກ ແມ່ນສາມາດເກັບກ່ຽວຜົນຜະລິດ.

**ສະຫລຸບຜົນຮັບ**

ຜ່ານການຈັດຕັ້ງປະຕິບັດຜ່ານມາ ໄດ້ມີຊາວກະສິກອນເຂົ້າຮ່ວມທັງໝົດ ຄື: ເມືອງ ນາໝໍ້ ບ້ານ ມີໄຊມີ 5 ຄອບຄົວ, ມີພື້ນທີ່ 3,5 ເຮັກຕາ ແລະ ໃຊ້ແນວພັນເບ້ຍໝາກແໜ່ງ 9.625 ເບ້ຍ ແລະ ຫຼັງຈາກປູກໄດ້ 2 ເດືອນແມ່ນໄດ້ມີການລົງສຳຫຼວດເປີເຊັນ ການລອດຕາຍ ແລະ ສຳຫຼວດການຈະເລີນເຕີບໂຕຊຶ່ງຜ່ານການລົງສຳຫຼວດຕົວຈິງແລ້ວແມ່ນໄດ້ຂໍ້ມູນດັ່ງນີ້:

- ຄວາມສູງຂອງໝາກແໜ່ງໂດຍສະເລ່ຍເທົ່າກັບ 70-80 ຊັງຕີແມັດ.
- ໜ້າຕ້າງຄໍຮາກ 1-2 ຊັງຕີແມັດ.
- ເປີເຊັນການລອດຕາຍໂດຍສະເລ່ຍເທົ່າກັບ 80 ເປີເຊັນ.

- ບັດຮຽນທີ່ພົບໄດ້ແມ່ນການປູກໝາກແໜ່ງ ຄຸນນະພາບຂອງເບັ້ຍໄມ້ບໍ່ໄດ້ມາດຕະຖານ, ເບັ້ຍໄມ້ບໍ່ແຂງແຮງ.

**ສະຖານທີ່**

ບ້ານ ມີໄຊ ເມືອງ ນາໝໍ້, ແຂວງອຸດົມໄຊ

**ວິທີການ**

ໃນການຫົວຂໍ້ການສຶກສານີ້ ແມ່ນເປັນການຕິດຕາມການຈະເລີນເຕີບໂຕຂອງໝາກແໜ່ງ ກວາງຕຸ້ງ ທີ່ໄດ້ປູກໃນໄລຍະຫ່າງ 2x2 ແມັດ, ແລະ ການໃຫ້ຜົນຜະລິດໃນອະນາຄົດ ໂດຍ ການສົມທຽບກັນລະຫວ່າງຄອບຄົວ ກັບ ຄອບຄົວ ໃນນີ້ ແມ່ນໄດ້ແບ່ງອອກເປັນ 5 ຄອບຄົວ.

ການເກັບກຳຂໍ້ມູນ ແມ່ນຈະໄດ້ດຳເນີນການຕິດຕາມໂດຍ ການວັດແທກການຈະເລີນເຕີບໂຕ ປີລະ 1 ຄັ້ງ

ການວິເຄາະຂໍ້ມູນ ແມ່ນວິເຄາະດ້ວຍໂປຼແກມ ( Excel)

**ແຜນກິດຈະກຳ**
**ສຳລັບສົກປີ 2006 - 2007**

ທຳອິດ ແມ່ນຈະໄດ້ມີການລົງວັດແທກການຈະເລີນເຕີບໂຕ ແລະ ສິ່ງສຳຄັນ ແມ່ນຈະໄດ້ມີການສ້ອມຄືນ ເບ້ຍທີ່ຂາດຫາຍໄປ, ແນະນຳປະຊາຊົນໃນການບົວລະບັດຮັກສາ ໂດຍສະເພາະແມ່ນການເປີດແສງ ແລະ ປ້ອງກັນໄຟລາມປ່າ, ຊອກຫາສາຍເຫດຂອງການຕາຍຂອງເບ້ຍໝາກແໜ່ງ ເພື່ອຈະໄດ້ມີການຫາທາງແກ້ໄຂ ໃນປີຕໍ່ໜ້າ.

ແຜນວຽກ

| 2006 ຫາ 2007 | ຕຸລາ | ພະຈິກ | ທັນວາ | ມັງກອນ | ກຸມພາ | ມີນາ | ເມສາ | ພຶດສະພາ | ມິຖຸນາ | ກໍລະກົດ | ສິງຫາ | ກັນຍາ | ຜູຮັບຜິດຊອບ |
|---|---|---|---|---|---|---|---|---|---|---|---|---|---|
| **ພາກຫ້ອງການ** | | | | | | | | | | | | | |
| ສ້າງແຜນ | | X | | | | | | x | | | | | FRC |
| ວິເຄາະຂໍ້ມູນ | | | | x | | | | | | x | | x | FRC |
| ຂຽນບົດລາຍງານ | | | | x | | | | | x | x | | | FRC |
| ນຳສະເໜີຜົນ | | | | x | | | | | x | x | | | FRC |
| **ວຽກງານພາກສະໜາມ** | | | | | | | | | | | | | |
| ເກັບກຳຂໍ້ມູນ | | X | X | | | | | | x | | | x | FRC,NAF Rec |
| ປູກສ້ອມ | | | | | | | | | x | | | | NM |

**ພະນັກງານເຂົ້າຮ່ວມ** ທ. ສຸນີ ພິມດວງສີ ພະນັກງານສູນຄົ້ນຄ້ວາປ່າໄມ້,ໄຊຍະສິດ ພະນັກງານສູນຄົ້ນຄວ້າພາກເໜືອ, ຄຳຫຼ້າ ທິບພະທົງ ພະນັກງານຫ້ອງການປະສານງານໂຄງການ ປະຈຳ ເມືອງນາໝໍ້.

**ງົບປະມານຄາດຄະເນ** 40,000,000 ກີບ (ໂຄງການ 3 ປີ)

**ສະຖານະພາບ** ກິດຈະກຳດັ່ງກ່າວ ໂດຍທົ່ວໄປ ແມ່ນເຫັນວ່າ ຕົ້ນໝາກແໜ່ງ ແມ່ນສາມາດຈະເລີນເຕີບໂຕໄດ້ດີ, ສະນັ້ນ ແມ່ນຈະໄດ້ມີການສືບຕໍ່ລົງເກັບຂໍ້ມູນ ທາງດ້ານການຈະເລີນເຕີບໂຕ. ແລະ ຂະຫຍາຍເນື້ອທີ່ການປູກອອກເປັນພື້ນທີ່ໃຫຍ່ ເຊິ່ງມີຫຼາຍຄອບຄົວເຂົ້າຮ່ວມ.

## 4.7. ຫົວຂໍ້ຄົ້ນຄ້ວາ : ການວາງແຜນກຸ່ມບັນພັດທະນາລົງເລິກວຽກຈັດສັນປ່າໄມ້ຊຸມຊົນ

ສຳເລັດການຝຶກອົບຮົມກ່ຽວກັບການວາງແຜນກຸ່ມບັນພັດທະນາລົງເລິກວຽກຈັດສັນປ່າໄມ້ຊຸມຊົນ ທີ່ໄດ້ຈັດຂຶ້ນທີ່ແຂວງ ອຸດົມໄຊ.

ໂດຍ: ຄູຝຶກ ແມ່ນ ທ່ານ ຄຳໄພ ມະນີວົງ

ພະນະງານ (ນັກຄົ້ນຄ້ວາ) ເຂົ້າຮ່ວມທັງໝົດ ລວມ 16 ຄົນ ເຊິ່ງມາຈາກ ສູນຄົ້ນຄ້ວາປ່າໄມ້ 4 ຄົນ, ສູນຄົນຄ້ວາກະສິກຳ ແລະ ປ່າໄມ້ ພາກເໜືອ 2 ຄົນ, ຫ້ອງການສົ່ງເສີມກະສິກຳເມືອງ ໂພນໄຊ 01 ຄົນ ພະນັກງານ ແລະ ຫ້ອງ

ການປະສານງານໂຄງການ ເມືອງ 4 ຄົນ ແລະ ຫ້ອງການສົ່ງເສີມກະສິກຳເມືອງນາໝໍ້ 01 ຄົນ ພະນັກງານ ແລະ ຫ້ອງການປະສານໂຄງການເມືອງ 4 ຄົນ

| | |
|---|---|
| **ພະນັກງານເຂົ້າຮ່ວມ** | ທ. ພິມມາ ປະທມຸມະວົງ, ອຸທອງ ວົງໄຊ ພະນັກງານສູນຄົ້ນຄ້ວາປ່າໄມ້, ນາງ ມະນີຈັນ, ທ ນິດພະກອນ ພະນັກງານ ສູນຄົ້ນ ຄວ້າພາກ ເໜືອ, ຄຳຫຼ້າ ທັບພະທົງ ແລະ ສຸລິວັນ ພະນັກງານ ຫ້ອງ ການປະສານງານໂຄງການ ປະຈຳ ເມືອງນາໝໍ້. |
| **ງົບປະມານຄາດຄະເນ** | 80,000,000 ກີບ (ໂຄງການ 3 ປີ) |
| **ສະຖານະພາບ** | ກິດຈະກຳດັ່ງກ່າວ ແມ່ນຈະໄດ້ ສືບຕໍ່ກຳລັງດຳເນີນການວາງແຜນ ແລະ ຂຽນແຜນ ພັດທະນາບ້ານ ລົງເລິກ ກ່ຽວກັບວຽກຈັດສັນປ່າໄມ້ ຊຸມຊົນ |